ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

10-16 ມີນາ 2023
ປີທີ 12
ສະບັບທີ 913
ລາຍສັປະດາ

## ປະທານສະພາຊົນຊາດ ສະພາແຫ່ງຊາດ ສສ.ຫວຽດນາມ ເຂົ້າຢ້ຽມຂ່ຳນັບປະທານສະພາແຫ່ງຊາດ

(ສພຊ) ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງສະຫາຍ ອື ແທັງ ຮາ ນຽກ ເກີດ່າ ກຳມະການສູນກາງພັກຄອມມູນິດຫວຽດນາມ, ປະທານສະພາຊົນຊາດ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະ ໃນວັນທີ 6 ມີນາ 2023 ທີ່ສະພາແຫ່ງຊາດ.



ສະຫາຍປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ສປປລາວ ໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນເພີ່ມທະວີຮັດແໜ້ນສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ-ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ໃຫ້ນັບມື້ແໜ້ນແຟ້ນ ໂດຍສະເພາະການຮ່ວມມືລະຫວ່າງ ສະພາແຫ່ງຊາດ ແຫ່ງ ສປປລາວ ກັບສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ ໃຫ້ນັບມື້ເພີ່ມພູນຄູນສ້າງຂຶ້ນເລື້ອຍໆ.

ສະຫາຍ ອື ແທັງ ຮາ ນຽກ ເກີດ່າ ໄດ້ສະແດງຄວາມຂອບໃຈຕໍ່ສະຫາຍ ປະທານສະພາແຫ່ງຊາດ ທີ່ໄດ້ໃຫ້ການຕ້ອນຮັບຄະນະຢ່າງອົບອຸ່ນ ແລະ ໄດ້ລາຍງານຈຸດປະສົງຂອງການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ໃນຄັ້ງນີ້ ໃຫ້ປະທານສະພາແຫ່ງຊາ ໄດ້ຮັບຊາບວ່າ:ກ່ຽວກັບການເມືອງ,ເສດຖະກິດ-ສັງຄົມ ກໍຄືບັນຫາສຳຄັນຂອງຊາດ, ກອງປະຊຸມສະພາສະໄໝສາມັນເທື່ອທີ V ໄດ້ຜ່ານກົດໝາຍ ມີ 12 ຮ່າງກົດໝາຍ ທີ່ສຳຄັນ ແລະ ມີການ

ອ່ານຕໍ່ໜ້າ 2

## ທ່ານ ປອ. ໄຊສົມພອນ ພົມວິຫານ ເນັ້ນຄະນະພັກ, ອຳນາດການປົກຄອງ ເມືອງນາຊາຍທອງ ເອົາໃຈໃສ່ 10 ຂໍ້



(ສພຊ) ໃນວັນທີ 3 ມີນາ 2023 ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ພ້ອມດ້ວຍ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX

ອ່ານໜ້າ 4

## ຮອງປະທານສະພາແຫ່ງຊາດ ຢ້ຽມຢາມພົບປະຜູ້ມີສິດເລືອກຕັ້ງ ຢູ່ເມືອງອຸທຸມພອນ ແຂວງສະຫວັນນະເຂດ

(ສພຊ) ເພື່ອປະຕິບັດສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ແລະ ເພື່ອລາຍງານການເຄື່ອນໄຫວວຽກງານໄລຍະຜ່ານມາ ຕໍ່ຜູ້ມີສິດເລືອກຕັ້ງ ໂດຍສະເພາະແມ່ນລາຍງານຜົນສຳເລັດຂອງກອງປະ

ອ່ານຕໍ່ໜ້າ 2



## ສຳເລັດການຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍ ຢູ່ 3 ແຂວງ



(ສພຊ) ເພື່ອເປັນການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍຂອງພະແນກຂັ້ນແຂວງ ພາຍຫຼັງກົດໝາຍໄດ້ຮັບການປະກາດໃຊ້ແລ້ວ ແລະ ການເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາແຫ່ງຊາດ ແນໃສ່ສ້າງສະຕິເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນສັງຄົມໃຫ້ນັບມື້ສູງຂຶ້ນ, ປະກອບ

ອ່ານຕໍ່ໜ້າ 4

## ທ່ານ ຄຳໃບ ດຳລັດ ເນັ້ນ ກຳມາທິການວັດທະນະທຳ-ສັງຄົມ ເອົາໃຈໃສ່ 6 ຂໍ້

(ສພຊ) ໃນວັນທີ 7 ມີນາ 2023 ທີ່ຫ້ອງປະຊຸມໂຮງແຮມລາວພລາຊາ ໂດຍການເປັນປະທານຮ່ວມຂອງທ່ານນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ທ່ານ ດຣ. ນາງ ເພຍ ບິດໂຕ ຜູ້ຕາງໜ້າອົງການຢູນິເຊັບ ປະຈຳລາວ;

ອ່ານຕໍ່ໜ້າ 3





### ຜົນງານຫຼາຍດ້ານ...

ອ່ານຕໍ່ໜ້າ 5



### ພົບປະຜູ້ມີສິດ...

ອ່ານຕໍ່ໜ້າ 6



### ຮອງປະທານ ສະພາປະຊາຊົນ...

ອ່ານຕໍ່ໜ້າ 7

## ປະທານ...

(ຕໍ່ຈາກໜ້າ 1)

ຕັດສິນ ໂດຍສະເພາະແມ່ນກົດໝາຍການປິ່ນປົວ, ກົດໝາຍທີ່ດິນ, ກົດໝາຍການຄ້າ ແລະ ກົດໝາຍໃຊ້ຄວາມຮຸນແຮງໃນຄອບຄົວ, ກົດໝາຍທີ່ໃຫ້ຄວາມສຳຄັນກວ່າໝູ່ແມ່ນກົດໝາຍທີ່ດິນ ເຊິ່ງໄດ້ມີການປັບປຸງໃໝ່ໃຫ້ແທດເໝາະກັບການດຳລົງຊີວິດຂອງປະຊາຊົນຫວຽດນາມ ໃນປັດຈຸບັນ.

ໃນຕອນເຊົ້າຂອງວັນດຽວກັນ, ສະຫາຍ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ ສະພາແຫ່ງຊາດ ແຫ່ງ ສປປລາວ ຍັງໄດ້ພົບປະເຮັດວຽກຂອງສະຫາຍ ອີ ແທັງ ຮ່າ ນຽກ ເກີດຳ ກຳມະການສູນກາງພັກກອມມູນິດຫວຽດນາມ, ປະທານສະພາຊົນຊາດ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ.

ໃນໂອກາດດັ່ງກ່າວ, ສະຫາຍ ຄຳຈັນ ໂສຕາປະເສີດ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ມີຄຳຄິດເຫັນ ຕໍ່ສະຫາຍ ອີ ແທັງ ຮ່າ ນຽກ ເກີດຳ ພ້ອມດ້ວຍຄະນະ ໃນໂອກາດທີ່ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ ຄັ້ງນີ້ວ່າ:




ການພົບປະປຶກສາຫາລືໃນຄັ້ງນີ້ ເປັນການປະຕິບັດເນື້ອໃນຈິດໃຈບົດບັນທຶກການຮ່ວມມືລະຫວ່າງ ກຳມາທິການບັນດາເຜົ່າ ສະພາແຫ່ງຊາດລາວ ກັບ ສະພາຊົນຊາດ ສະພາແຫ່ງຊາດ ສສ.ຫວຽດນາມ ເພື່ອຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ-ສອງລັດ, ປະຊາຊົນສອງຊາດ ກໍຄືສອງອົງການນິຕິບັນຍັດ ເວົ້າລວມ, ເວົ້າສະເພາະ ແມ່ນສອງພາກສ່ວນ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງໆຂຶ້ນ ແລະ ປະກອບສ່ວນເຂົ້າໃນກິດຈະກຳສະເຫຼີມສະຫຼອງການສ້າງຕັ້ງສາຍພົວພັນການທູດ ຄົບຮອບ 60 ປີ ແລະ ວັນເຊັນສັນຍາມິດຕະພາບ ແລະ ການຮ່ວມມືລະຫວ່າງສອງປະເທດ ລາວ-ຫວຽດນາມ ຄົບຮອບ 45 ປີ ເຊິ່ງຫາກໍສຳເລັດລົງ ໃນປີ 2022 ຜ່ານມາ, ການມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ ໃນຄັ້ງນີ້ ເຊິ່ງເປັນໂອກາດດີໃຫ້ສອງຝ່າຍ ໄດ້ມີການແລກປ່ຽນຄຳຄິດຄຳເຫັນ ແລະ ຖອດຖອນບົດຮຽນນຳກັນ ກ່ຽວກັບບັນຫາຕ່າງໆ ທີ່ຕິດພັນກັບການເຄື່ອນໄຫວວຽກງານຂອງກຳມາທິການບັນດາເຜົ່າ ສະພາແຫ່ງຊາດລາວ ຊຸດທີ IX ແລະ ສະພາຊົນຊາດ ສະພາແຫ່ງຊາດ ສສ.ຫວຽດນາມ ຊຸດທີ XV, ຂໍອວຍພອນໄຊອັນປະເສີດໃຫ້ສະຫາຍ ອີ ແທັງ ຮ່າ ນຽກ ເກີດຳ ພ້ອມດ້ວຍຄະນະ ຈົ່ງມີພາລານາໄມສົມບູນ ມີຄວາມຜາສຸກໃນຄອບຄົວ, ສ່ວນຕົວ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນມີກຽດຂອງບັນດາສະຫາຍ; ອວຍພອນການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ຂອງຄະນະໃນຄັ້ງນີ້ ຈົ່ງປະສົບຜົນສຳເລັດ. ພ້ອມທັງສືບຕໍ່ໃນການເປັນຂົວຕໍ່ທີ່ດີໃຫ້ແກ່ການພົວພັນ ແລະ ຮ່ວມມືລະຫວ່າງ ສອງອົງການນິຕິບັນຍັດ ລາວ-ຫວຽດນາມ ໃຫ້ນັບມື້ເຂົ້າສູ່ລວງເລິກ; ອວຍພອນແດ່ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ-ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ຈົ່ງໝັ້ນຄົງຂະໜົງແກ່ນຊົ່ວກາລະນານ.

ໂອກາດດັ່ງກ່າວ, ສະຫາຍ ອີ ແທັງ ຮ່າ ນຽກ ເກີດຳ ໄດ້ກ່າວສະແດງຄວາມຂອບໃຈຕໍ່ສະຫາຍປະທານກຳມາທິການບັນດາເຜົ່າ ສະພາແຫ່ງຊາດແຫ່ງ ສປປລາວ ພ້ອມດ້ວຍຄະນະ ທີ່ໄດ້ສະຫຼະເວລາອັນມີຄ່າຕ້ອນຮັບຄະນະຢ່າງອົບອຸ່ນ ແລະ ໄດ້ລາຍງານຈຸດປະສົງຂອງການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ໃຫ້ຊາບວ່າ: ກ່ຽວກັບການເມືອງ, ເສດຖະກິດ-ສັງຄົມ ກໍຄືບັນຫາສຳຄັນຂອງຊາດ, ກອງປະຊຸມສະພາສະໄໝສາມັນເທື່ອທີ V ໄດ້ຜ່ານກົດໝາຍ ມີ 12 ຮ່າງກົດໝາຍ ທີ່ສຳຄັນ ແລະ ມີການຕັດສິນໂດຍສະເພາະແມ່ນກົດໝາຍການປິ່ນປົວ, ກົດໝາຍທີ່ດິນ, ກົດໝາຍການຄ້າ ແລະ ກົດໝາຍໃຊ້ຄວາມຮຸນແຮງໃນຄອບຄົວ, ກົດໝາຍທີ່ໃຫ້ຄວາມສຳຄັນກວ່າໝູ່ແມ່ນກົດໝາຍທີ່ດິນ ເຊິ່ງໄດ້ມີການປັບປຸງໃໝ່ໃຫ້ແທດເໝາະກັບການດຳລົງຊີວິດໃນປັດຈຸບັນ.

ພ້ອມນັ້ນ, ກຳມາທິການບັນດາເຜົ່າ ສະພາແຫ່ງຊາດລາວ ຍັງໄດ້ຈັດກອງປະຊຸມສຳມະນາແລກປ່ຽນບົດຮຽນ ລະຫວ່າງກຳມາທິການບັນດາເຜົ່າ ສະພາແຫ່ງຊາດແຫ່ງ ສປປລາວ ກັບສະພາຊົນຊາດ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ຢູ່ສະພາແຫ່ງຊາດ ໃຫ້ກຽດເຂົ້າຮ່ວມໂດຍສະຫາຍ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກປະຊາຊົນປະຕິວັດລາວ, ຮອງປະທານສະພາແຫ່ງຊາດ ແຫ່ງ ສປປລາວ, ສະຫາຍ ອີ ແທັງ ຮ່າ ນຽກ ເກີດຳ, ກຳມະການສູນກາງພັກຄອມມູນິດຫວຽດນາມ, ປະທານສະພາຊົນຊາດ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະຝ່າຍຫວຽດນາມ ແລະ ສະຫາຍ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ ສະພາແຫ່ງຊາດ ແຫ່ງ ສປປລາວ, ມີບັນດາສະຫາຍປະທານ, ຮອງປະທານກຳມາທິການ, ຄະນະກົມ, ຄະນະພະແນກ, ແຂກຖືກເຊີນພາກສ່ວນທີ່ກ່ຽວຂ້ອງ ແລະ ພະນັກງານວິຊາການ ພາຍໃນສະພາແຫ່ງຊາດເຂົ້າຮ່ວມ.

ໃນໂອກາດນີ້, ສະຫາຍ ອີ ແທັງ ຮ່າ ນຽກ ເກີດຳ ພ້ອມດ້ວຍຄະນະ ຍັງໄດ້ທ່ຽວຊົມຫ້ອງປະຊຸມໃຫຍ່ຂອງສະພາແຫ່ງຊາດລາວ, ຢ້ຽມຂໍານັບປະທານສູນກາງແນວລາວສ້າງຊາດ ແລະ ລັດຖະມົນຕີກະຊວງພາຍໃນ ແລະ ໄດ້ເດີນທາງທ່ອງທ່ຽວທີ່ແຂວງຫຼວງພະບາງ ເມືອງມໍລະດົກໂລກອີກດ້ວຍ.

(ອານຸສອນ ພູມມີທອນ)

## ຮອງປະທານ...

(ຕໍ່ຈາກໜ້າ 1)

ຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຢ້ຽມຢາມຖາມຂ່າວ, ຮັບຟັງຄຳຄິດຄຳເຫັນຄວາມມຸ່ງມາດປາຖະໜາຂອງປະຊາຊົນລາວບັນດາເຜົ່າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດນັ້ນ, ໃນລະຫວ່າງວັນທີ 5-8 ມີນາ 2023 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງອຸທຸມພອນ ໄດ້ເຄື່ອນໄຫວຢ້ຽມຢາມພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງອຸທຸມພອນ ແຂວງສະຫວັນນະເຂດ ຢູ່ 3 ຈຸດຄື: ພົບປະພໍ່ແມ່ປະຊາຊົນ ກຸ່ມບ້ານພິນ, ພົບປະຜູ້ມີສິດເລືອກຕັ້ງ ຢູ່ກອງພົນທີ 4 ແລະ ອົງການປົກຄອງເມືອງ ໂດຍມີຄະນະພັກເມືອງ, ຄະນະພັກ-ຄະນະບັນຊາ, ພະນັກງານ-ນັກຮົບ ທົ່ວກອງພົນທະຫານຮາບທີ 4 ແລະ 5 ກົມກອງອ້ອມຂ້າງ; ຄະນະພັກຮາກຖານກຸ່ມບ້ານ, ອົງການຈັດຕັ້ງບ້ານ, ພະນັກງານ-ລັດຖະກອນ, ພະນັກງານອາວຸໂສບຳນານ, ເຖົ້າແກ່ແນວໂຮມ, ພໍ່ແມ່ປະຊາຊົນ, ຄູ ແລະ ນັກຮຽນ ເຂົ້າຮ່ວມເປັນຈຳນວນຫຼາຍ.

ໃນການລົງພົບປະໃນ 3 ຈຸດດັ່ງກ່າວ ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມ ຂອງເມືອງ, ກອງພົນທີ 4 ແລະ ກຸ່ມບ້ານພິນ. ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ກໍໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໂດຍເນັ້ນໃສ່ບັນດາເນື້ອໃນມະຕິກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງສະຫວັນນະເຂດ, ແນວທາງຂອງພັກ, ນະໂຍບາຍຂອງລັດ ຕິດພັນກັບການປະຕິບັດ 2 ວາລະແຫ່ງຊາດ ໃຫ້ບັນດາເປົ້າໝາຍເຂົ້າຮ່ວມ ທັງໄດ້ຮັບຮູ້ ແລະ ເຂົ້າໃຈຕື່ມອີກ. ນອກຈາກນັ້ນ ກໍໄດ້ເປີດໂອກາດໃຫ້ພໍ່ແມ່ປະຊາຊົນ ໄດ້ສະແດງຄຳຄິດຄຳເຫັນ ແລະ ຂໍ້ສະເໜີຕ່າງໆ ຕໍ່ຜູ້ແທນຂອງຕົນ ເຊິ່ງຂໍ້ສະເໜີຕ່າງໆ ແມ່ນພົວພັນເຖິງການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ເປັນຕົ້ນ: ການສ້າງເສັ້ນທາງເຂົ້າບ້ານ, ນ້ຳສະອາດ, ການສຶກສາ, ສາທາລະນະສຸກ, ການປະຕິບັດນະໂຍບາຍຕໍ່ຜູ້ເສຍອົງຄະ, ການສ້າງວຽກເຮັດງານທຳ ແລະ ອື່ນໆ.



ຜ່ານການສະເໜີຂອງປະຊາຊົນຂ້າງເທິງນັ້ນ, ທ່ານຮອງປະທານສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງອຸທຸມພອນ ແລະ ທ່ານເຈົ້າເມືອງອຸທຸມພອນ ກໍໄດ້ໃຫ້ການຊີ້ແຈງ, ອະທິບາຍຕາມແຜນການຂອງລັດຖະບານ ກໍຄືຂອງແຂວງ ແລະ ເມືອງວາງອອກ ໂດຍຕິດພັນກັບເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ເຊິ່ງໄດ້ຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສິ່ງທ້າທາຍໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດໃນປັດຈຸບັນ ໂດຍສະເພາະຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ຍົກໃຫ້ເຫັນນະໂຍບາຍ, ມາດຕະການທີ່ລັດຖະບານ ກໍຄືທ້ອງຖິ່ນວາງອອກ ເພື່ອສູ້ຊົນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ທີ່ລັດຖະບານກຳນົດ ໃຫ້ມີຜົນສຳເລັດ. ພ້ອມດຽວກັນນັ້ນ, ກໍໄດ້ຮຽກຮ້ອງໃຫ້ຄະນະພັກ, ອົງການປົກຄອງ ແລະ ປະຊາຊົນຊາວເມືອງອຸທຸມພອນ ຈົ່ງໄດ້ເປັນເຈົ້າການເຂົ້າຮ່ວມ, ປະກອບສ່ວນຈັດຕັ້ງປະຕິບັດຮ່ວມກັບພັກ-ລັດ ເປັນຕົ້ນ: ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ປະຕິບັດ 2 ວາລະແຫ່ງຊາດ, ເປັນເຈົ້າການໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເພີ່ມທະວີການເຕົ້າໂຮມຄວາມສາມັກຄີບັນດາເຜົ່າໃຫ້ເປັນປຶກແຜ່ນ, ສືບຕໍ່ເສີມຂະຫຍາຍ ແລະ ຮັກສາມູນເຊື້ອຮີດຄອງປະເພນີອັນດີງາມຂອງເຜົ່າ, ຂອງທ້ອງຖິ່ນ ແລະ ຂອງຊາດ, ປະຕິບັດສິດ ແລະ ພັນທະຂອງພົນລະເມືອງໃຫ້ຄົບຖ້ວນ ຕາມທີ່ໄດ້ກຳນົດໃນລັດຖະທຳມະນູນ ແລະ ກົດໝາຍ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງຂຶ້ນຢ່າງບໍ່ຢຸດຢັ້ງ.

ໂອກາດລົງເຄື່ອນໄຫວຢ້ຽມຢາມຄັ້ງນີ້, ຄະນະ ຍັງໄດ້ຢ້ຽມຢາມໂຄງການຊົນລະປະທານຫ້ວຍທ່າຮາວ ບ້ານນາຄຳ ເຊິ່ງເປັນໂຄງການລັດຖະບານລົງທຶນ, ເປັນໂຄງການຮັບປະກັນສະບຽງອາຫານ, ເປັນໂຄງການຕ້ານແລ້ງ ຂອງເມືອງອຸທຸມພອນ ເຊິ່ງສາມາດນຳໃຊ້ນ້ຳໃສ່ພື້ນທີ່ການຜະລິດເຖິງ 1.700 ເຮັກຕາ.

ຈາກນັ້ນ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ພ້ອມດ້ວຍຄະນະ ຍັງໄດ້ເຂົ້າພົບປະຢ້ຽມຢາມເລຂາພັກແຂວງ, ເຈົ້າແຂວງສະຫວັນນະເຂດ ເພື່ອລາຍງານການເຄື່ອນໄຫວຂອງຄະນະ ແລະ ນຳເອົາຂໍ້ສະເໜີຂອງຜູ້ມີສິດເລືອກຕັ້ງ ແຈ້ງໃຫ້ການນຳຂອງແຂວງຊາບ ແລະ ຊອກຫາວິທີແກ້ໄຂໃນຕໍ່ໜ້າ ໃສ່ຄຳຄິດຄຳເຫັນ, ຄຳສະເໜີຂອງຜູ້ມີສິດເລືອກຕັ້ງ.

ໃນການເຄື່ອນໄຫວພົບປະຄັ້ງນີ້, ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ນຳເອົາເຄື່ອງນຸ່ງຫົ່ມ, ຜ້າເສື່ອນອນເດັກອານຸບານ, ປຶ້ມຫຼັກສູດ, ປຶ້ມຂຽນ ມອບໃຫ້ກຸ່ມບ້ານພິນ, ກຸ່ມບ້ານດົງໃນ, ເມືອງອາດສະພອນ ແລະ ວັດທາດພະນົມນ້ອຍ ຈຳນວນໜຶ່ງ.

(ນາງ ສຸມິນທາ ງາໄຊ)

# ຜົນສຳເລັດການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

ຕໍ່ຈາກສະບັບກ່ອນ...

ຄ. ດ້ານຄົງຄ້າງ

1. ການປະສານສົມທົບເຊິ່ງກັນ ແລະ ກັນ ຂອງພາກສ່ວນຕ່າງໆ ໃນການສ້າງ ແລະ ປັບປຸງກົດໝາຍທີ່ພົວພັນກັບຫຼາຍຂົງເຂດວຽກງານ ບາງຄັ້ງບໍ່ທັນກົມກຽວ; ການສ້າງ ແລະ ປັບປຸງກົດໝາຍຈຳນວນໜຶ່ງ ຍັງບໍ່ທັນບັນລຸຕາມແຜນການປີ ລວມທັງການສ້າງນິຕິກຳໃຕ້ກົດໝາຍ; ການສ້າງກົດໝາຍມີຈຳນວນຫຼາຍ ແຕ່ການຈັດຕັ້ງປະເມີນກົດໝາຍຍັງເຮັດໄດ້ໜ້ອຍ; ຄວາມເປັນເຈົ້າການລົງເລິກຄົ້ນຄວ້າບົດຮຽນຂອງເພື່ອນມິດ ແລະ ສາກົນ ຍັງບໍ່ທັນສູງ, ບາງກົດໝາຍ ຍັງຕ້ອງໄດ້ປັບປຸງຫຼີບໄປຫຼີບມາຫຼາຍຄັ້ງ ເຮັດໃຫ້ການປະກາດໃຊ້ກົດໝາຍ ທີ່ສະພາແຫ່ງຊາດຮັບຮອງເອົາແລ້ວ ຍັງບໍ່ທັນປະຕິບັດໄດ້ຕາມກຳນົດເວລາ;

2. ການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍຜ່ານກົນໄກດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ບາງຄັ້ງຄາວ ການຄົ້ນຄວ້າວິເຄາະວິໄຈບັນຫາ ແລະ ກັ່ນຕອງຂໍ້ມູນ ຍັງບໍ່ທັນເລິກເຊິ່ງ, ການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຍັງບໍ່ທັນກົມກຽວ ເຮັດໃຫ້ເນື້ອໃນທີ່ນຳມາພິຈາລະນາຢູ່ກອງປະຊຸມ ມີຫຼາຍຫົວຂໍ້, ເວລາຈຳກັດ, ການຄົ້ນຄວ້າພິຈາລະນາເນື້ອໃນບໍ່ທັນເລິກເຊິ່ງເທົ່າທີ່ຄວນ;

3. ການຕິດຕາມກວດກາ ເຖິງວ່າເຮັດໄດ້ຫຼາຍຂົງເຂດ, ແຕ່ຄຸນນະພາບໃນການແກ້ໄຂບັນຫາທີ່ກວດພົບເຫັນ ຍັງບໍ່ທັນສູງ; ການຊຸກຍູ້ພາກສ່ວນກ່ຽວຂ້ອງໃນການແກ້ໄຂວຽກງານສາຍດ່ວນຍັງຊັກຊ້າ ແລະ ບໍ່ທັນແກ້ໄຂໄດ້ຫຼາຍເທົ່າທີ່ຄວນ; ການສ້າງແຜນການຕິດຕາມກວດກາ ເຖິງວ່າໄດ້ກຳນົດຫົວຂໍ້ລະອຽດ ແຕ່ການຈັດຕັ້ງປະຕິບັດວຽກງານຕົວຈິງຍັງບໍ່ທັນໄດ້ລົງເລິກແນະນຳວິທີແກ້ໄຂ ແລະ ແຈ້ງຜົນຂອງການແກ້ໄຂໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງຂອງທ້ອງຖິ່ນຮັບຮູ້ນຳ;

4. ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນທີ່ສົ່ງມາຜ່ານສະພາແຫ່ງຊາດຍັງຊັກຊ້າ ຫຼາຍຄະດີຍັງແກ່ຍາວມາຫຼາຍປີ ແລະ ບໍ່ທັນໄດ້ຮັບການແກ້ໄຂ;

5. ການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ-ລັດຖະກອນຍັງບໍ່ທັນມີຈຸດສຸມ, ບາງຄັ້ງ ພາກສ່ວນຕ່າງໆ ຍັງຈັດການຝຶກອົບຮົມແບບພໍໃຜພໍລາວ, ບໍ່ທັນລວມສູນ ເຮັດໃຫ້ເວລາຈັດຕັ້ງປະຕິບັດມັກທັບຊ້ອນກັນ;

6. ການຜັນຂະຫຍາຍແຜນການລວມຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ເປັນແຜນການເຄື່ອນໄຫວວຽກງານລະອຽດຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ການສະຫຼຸບລາຍງານການເຄື່ອນໄຫວໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ບາງຄັ້ງບໍ່ທັນເປັນລະບົບປົກກະຕິ; ການເຄື່ອນໄຫວວຽກງານຈຳນວນໜຶ່ງຍັງມີລັກສະນະປົນເປກັນກັບການເຮັດບົດບາດຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

7. ການເຄື່ອນໄຫວວຽກງານຕ່າງປະເທດ ຂອງສະພາແຫ່ງຊາດຍັງບໍ່ທັນບັນລຸໄດ້ຕາມແຜນການ, ການເຂົ້າຮ່ວມກອງປະຊຸມສາກົນຈຳນວນໜຶ່ງ ຍັງມີຄວາມຈຳກັດ.

ງ. ສາເຫດພາໃຫ້ມີດ້ານຄົງຄ້າງ

1. ຍ້ອນການຈັດຕັ້ງຜັນຂະຫຍາຍແຜນການສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ໃນໄລຍະຜ່ານມາຍັງບໍ່ທັນໄດ້ຮັບຄວາມເອົາໃຈໃສ່ແຕ່ຫົວທີ ເຮັດໃຫ້ການກະກຽມຮ່າງກົດໝາຍຈຳນວນໜຶ່ງຊັກຊ້າ;

2. ຍ້ອນການຜັນຂະຫຍາຍນິຕິກຳຂອງຄະນະປະຈຳສະພາແຫ່ງຊາດອອກເປັນອັນລະອຽດ ຍັງມີຄວາມຊັກຊ້າ; ການຄົ້ນຄວ້າຫົວຂໍ້ເນື້ອໃນທີ່ຈະນຳເຂົ້າພິຈາລະນາຢູ່ໃນກອງປະຊຸມບໍ່ທັນມີຈຸດສຸມ; ຄວາມເປັນເຈົ້າການຂອງພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ ໃນການຄົ້ນຄວ້າກະກຽມເອກະສານທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມ ບໍ່ທັນເຮັດໄດ້ດີເທົ່າທີ່ຄວນ;

3. ຍ້ອນການຕິດຕາມກວດກາ ແລະ ຊຸກຍູ້ກະຊວງ, ອົງການ ໃນການແກ້ໄຂບັນຫາທີ່ສະພາແຫ່ງຊາດສົ່ງໃຫ້ແຕ່ລະໄລຍະ ບໍ່ທັນເປັນລະບົບປົກກະຕິຕໍ່ເນື່ອງ ເຮັດໃຫ້ວຽກງານຕິດຕາມກວດກາຈຳນວນໜຶ່ງບໍ່ທັນມີປະສິດທິຜົນສູງ ໂດຍສະເພາະການແກ້ໄຂສາຍດ່ວນກອງປະຊຸມສະພາແຫ່ງຊາດ ແລະ ບໍ່ທັນຜັນຂະຫຍາຍກົດໝາຍອອກເປັນນິຕິກຳໃຕ້ກົດໝາຍ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ; ການຄົ້ນຄວ້າກຳນົດຫົວຂໍ້ຕິດຕາມກວດກາ ບໍ່ທັນລະອຽດແຕ່ຫົວທີ;

4. ຍ້ອນການກຳແໜ້ນເຊື່ອມຊຶມນິຕິກຳທີ່ກ່ຽວຂ້ອງຈຳນວນໜຶ່ງບໍ່ທັນເລິກເຊິ່ງ ເຮັດໃຫ້ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ບາງດ້ານຍັງປົນເປກັນ;

5. ຍ້ອນການຄົ້ນຄວ້າກຳນົດເນື້ອໃນຂອງນິຕິກຳກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກເສນາທິການຊ່ວຍວຽກຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງຈຳນວນໜຶ່ງ ຍັງບໍ່ທັນລະອຽດຈະແຈ້ງ ເຮັດໃຫ້ປະສິດທິຜົນຂອງການເຄື່ອນໄຫວວຽກງານບາງດ້ານບໍ່ທັນສູງ.

ຈ. ບົດຮຽນຖອດຖອນໄດ້

1. ຄວາມເປັນເຈົ້າການຂອງພາກສ່ວນກ່ຽວຂ້ອງ ໃນການກະກຽມເນື້ອໃນກົດໝາຍແຕ່ຫົວທີ, ປຶກສາຫາລືຄວາມເປັນເອກະພາບກັບພາກສ່ວນກ່ຽວຂ້ອງ, ຈັດຕັ້ງປະຕິບັດຂັ້ນຕອນການສ້າງ ແລະ ປັບປຸງກົດໝາຍ ຕາມກົດໝາຍວ່າດ້ວຍການສ້າງນິຕິກຳ, ຈັດກອງປະຊຸມສຳມະນາລະດົມຄວາມຄິດເຫັນຈາກເປົ້າໝາຍຕ່າງໆ ແລະ ຈັດຕັ້ງການທາບທາມຄວາມເຫັນຂອງປະຊາຊົນ, ການປັບປຸງ, ຮຽບຮຽງເນື້ອໃນຮ່າງກົດໝາຍ ແລະ ການປະເມີນການຈັດຕັ້ງປະຕິບັດກົດໝາຍ ລວມທັງການປະກາດໃຊ້ກົດໝາຍໃຫ້ທັນເວລາ ຈະເຮັດໃຫ້ການປະຕິບັດພາລະບົດບາດດ້ານນິຕິບັນຍັດ ມີປະສິດທິພາບ ແລະ ປະສິດທິຜົນ;

2. ການເພີ່ມທະວີການປະສານສົມທົບວຽກງານ ລະຫວ່າງສະພາແຫ່ງຊາດ, ບັນດາກຳມາທິການ ແລະ ລັດຖະບານ, ບັນດາກະຊວງ, ອົງການ ເພື່ອປຶກສາຫາລືວຽກງານຕ່າງໆໃຫ້ເປັນລະບົບປົກກະຕິ ແລະ ຕາມນິຕິກຳກຳນົດ ຈະເຮັດໃຫ້ເນື້ອໃນທີ່ຈະນຳມາພິຈາລະນາຢູ່ກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ມີຄວາມເປັນເອກະພາບ, ຮັບປະກັນຄຸນນະພາບ ແລະ ທັນກຳນົດເວລາ;

3. ການຄົ້ນຄວ້າກຳນົດແຜນການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ ແລະ ກົງຈັກການຈັດຕັ້ງສະພາແຫ່ງຊາດໃຫ້ສຳເລັດແຕ່ຫົວທີດ້ວຍການກຳນົດຫົວຂໍ້, ແຕ່ງຕັ້ງຄະນະລົງຕິດຕາມກວດກາ, ກຳນົດເປົ້າໝາຍລົງຕິດຕາມກວດກາໃຫ້ລະອຽດ, ສະໜອງງົບປະມານໃຫ້ສົມຄູ່ກັບວຽກງານດັ່ງກ່າວ ລວມທັງການສະຫຼຸບ

ອ່ານຕໍ່ສະບັບໜ້າ...

## ທ່ານ ຄຳໃບ ດຳລັດ...

(ຕໍ່ຈາກໜ້າ 1)

ເຂົ້າຮ່ວມມີທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳຂົງເຂດວຽກງານວັດທະນະທຳ-ສັງຄົມ, ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງກຳມາທິການວັດທະນະທຳ-ສັງຄົມ 18 ແຂວງ; ຊ່ຽວຊານຈາກອົງການ UNICEF ແລະ ພະນັກງານທີ່ກ່ຽວຂ້ອງຈາກສະພາແຫ່ງຊາດ.

ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການ ການຄົ້ນຄວ້າແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາຕໍ່ບັນດາເນື້ອໃນ, ບົດຮຽນ ເຖິງ 12 ຫົວຂໍ້ຄື: ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ໃນການເຄື່ອນໄຫວກ່ຽວກັບວຽກງານແມ່ ແລະ ເດັກ; ສະພາບການຂອງເດັກໃນ ສປປລາວ; 3) ບົດຮຽນໃນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ສົນທິສັນຍາສາກົນທີ່ກ່ຽວຂ້ອງກັບແມ່ຍິງ ແລະ ເດັກ; ຄວາມຄືບໜ້າໃນການປະຕິບັດເປົ້າໝາຍ SDGs ທີ່ຕິດພັນກັບວຽກງານແມ່ ແລະ ເດັກ; ການຕິດຕາມກວດກາງົບປະມານທີ່ກ່ຽວຂ້ອງກັບຂະແໜງການພັດທະນາທີ່ກ່ຽວກັບເດັກໃນຂົງເຂດອາຊຽນ, ສະພາບ ແລະ ສິ່ງທ້າທາຍວຽກງານໂພຊະນາການ ແລະ ການສົ່ງເສີມການລ້ຽງລູກດ້ວຍນົມແມ່, ສະພາບງົບປະມານໃນຂະແໜງການໂພຊະນາການ; ການຮັກສາສຸຂະພາບແມ່ແລະເດັກ, ການສັກຢາກັນພະຍາດ ລົງເລິກສະພາບ, ສິ່ງທ້າທາຍ ແລະ ດ້ານງົບປະມານ; ການສຶກສາຂັ້ນພື້ນຖານ ແລະ ສິ່ງທ້າທາຍ; ການລົງທຶນງົບປະມານຂອງຂະແໜງການສຶກສາ ແລະ ຜົນສະທ້ອນ; ສິ່ງກີດຂວາງທີ່ເຮັດໃຫ້ເດັກບໍ່ສາມາດພັດທະນາໄດ້ເຕັມສ່ວນໃນຮຸ່ນຄົນປີ 2023 ການວິໄຈຄວາມຂາດເຂີນຂອງເດັກທີ່ທັບຊ້ອນໃນຫຼາຍດ້ານຢູ່ໃນ ສປປລາວ; ການປະເມີນນະໂຍບາຍ ແລະ ກົດໝາຍ.

ໂອກາດດັ່ງກ່າວ, ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນໂອ້ລົມ ແລະ ເນັ້ນ ກຳມາທິການວັດທະນະທຳ-ສັງຄົມ ເອົາໃຈໃສ່ 6 ຂໍ້ດັ່ງນີ້:

1. ສະເໜີໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການວັດທະນະທຳ-ສັງຄົມ ສືບຕໍ່ຍົກສູງຄວາມຮັບຜິດຊອບຂອງຕົນ ດ້ວຍການເອົາໃຈໃສ່ຈັດຕັ້ງປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ:ດ້ານນິຕິບັນຍັດ, ຕົກລົງບັນຫາສຳຄັນພື້ນຖານຂອງຊາດ ແລະ ຕິດຕາມກວດກາ ໂດຍສະເພາະໃນການຄົ້ນຄວ້າ, ກຳແໜ້ນນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ກົດໝາຍ ແລະ ນິຕິກຳ ທີ່ຕິດພັນກັບງົບປະມານການພັດທະນາວຽກງານແມ່ຍິງ ແລະ ເດັກໃຫ້ເລິກເຊິ່ງກວ່າເກົ່າ ເພື່ອເປັນເຄື່ອງມື ແລະ ເປັນບ່ອນອີງໃຫ້ແກ່ການເຂົ້າຮ່ວມຄົ້ນຄວ້າ ແລະ ພິຈາລະນາສ້າງ ແລະ ປຸງກົດໝາຍ, ບັນດານິຕິກຳທີ່ກ່ຽວຂ້ອງ ຢູ່ເຂດເລືອກຕັ້ງຂອງຕົນໃນແຕ່ລະໄລຍະ;

2. ເອົາໃຈໃສ່ເກັບກຳຂໍ້ມູນ,ບັນດາເນື້ອໃນຂອງກອງປະຊຸມຄັ້ງນີ້ ເພື່ອໝູນໃຊ້ ແລະ ເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍຄືແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງໂດຍສະເພາະໃນເວລາເຂົ້າຮ່ວມສ້າງແຜນແຕ່ຫົວທີ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໃນກົດໝາຍ;

3. ເອົາໃຈໃສ່ຕິດຕາມ ແລະ ຊຸກຍູ້ຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນພັດທະນາ, ໂຄງການ, ແຜນງານຕ່າງໆທີ່ກ່ຽວຂ້ອງກັບການພັດທະນາເດັກ ແລະ ແມ່ຍິງຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ມີຜົນສຳເລັດແຕ່ລະໄລຍະ;

4. ເພີ່ມທະວີການພົວພັນ, ປະສານສົມທົບພາຍໃນ ແລະ ພາຍນອກ, ລະຫວ່າງສູນກາງ ແລະ ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເປັນທ່າແຮງຕໍ່ການຊຸກຍູ້ ແລະ ຕິດຕາມການປະຕິບັດວຽກງານການພັດທະນາແມ່ຍິງ ແລະ ເດັກໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

5. ຊຸກຍູ້ ແລະ ເຂົ້າຮ່ວມເຜີຍແຜ່ວຽກງານການພັດທະນາແມ່ຍິງ ແລະ ເດັກ, ປະເມີນຜົນໄດ້ຮັບຈາກການປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ບັນດາຄາດໝາຍທີ່ຕິດພັນກັບການພັດທະນາວຽກງານດັ່ງກ່າວໃຫ້ເລິກເຊິ່ງກວ່າເກົ່າ ແນໃສ່ພັດທະນາເດັກ ແລະ ແມ່ຍິງໃຫ້ມີຄຸນນະພາບດີຂຶ້ນ;

6. ຜ່ານການຈັດຕັ້ງປະຕິບັດຕົວຈິງ ຄວນມີການສະຫຼຸບ, ຖອດຖອນບົດຮຽນ, ລາຍງານ ແລະ ຂໍທິດຊີ້ນຳຈາກ ຂັ້ນເທິງ ເປັນປົກກະຕິ.

(ນາງ ກຸກກິກ ບຸດດາໄຊ)



## ທ່ານ ປອ...

(ຕໍ່ຈາກໜ້າ 1)

ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ນຳໂດຍທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ມີບັນດາຄະນະພັກ, ອົງການປົກຄອງ, ຂະແໜງການ, ພະນັກງານຫຼັກແຫຼ່ງຂອງເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າຂອງເມືອງ ເຂົ້າຮ່ວມເປັນຈຳນວນຫຼາຍ.

ໃນໂອກາດດັ່ງກ່າວ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ເນັ້ນໃຫ້ຄະນະພັກ, ອຳນາດການປົກຄອງເມືອງນາຊາຍທອງ ເອົາໃຈໃສ່ 10 ຂໍ້ດັ່ງນີ້:

1. ສະເໜີໃຫ້ຄະນະພັກ, ອົງການປົກຄອງເມືອງເພີ່ມທະວີການນຳພາຮອບດ້ານຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມໜັກແໜ້ນ, ເອົາໃຈໃສ່ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ເຮັດໃຫ້ສັງຄົມມີຄວາມສະຫງົບປອດໄພ, ເປັນພື້ນຖານໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ເຊິ່ງເປັນການປະກອບສ່ວນສຳຄັນໃຫ້ນະຄອນຫຼວງວຽງຈັນ;

2. ສະເໜີໃຫ້ຄະນະພັກ, ອົງການປົກຄອງເມືອງເອົາໃຈໃສ່ຊຸກຍູ້ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນເຮັດການຜະລິດກະສິກຳ, ການລ້ຽງສັດ ເປັນສິນຄ້າ, ມີມາດຕະຖານ, ມີຄຸນນະພາບ ເພື່ອສະໜອງໃຫ້ແກ່ບັນດາໂຮງແຮມ, ຮ້ານອາຫານ, ຕະຫຼາດຕ່າງໆໃນນະຄອນຫຼວງວຽງຈັນ ເຊິ່ງເປັນບ່ອນຮອງຮັບຜົນຜະລິດຂອງປະຊາຊົນ ເອົາໃຈໃສ່ສ້າງ ແລະ ຂະຫຍາຍຮູບແບບເສດຖະກິດລວມໝູ່ຂອງປະຊາຊົນໃຫ້ກາຍເປັນຖານເສດຖະກິດອັນໝັ້ນຄົງ ແລະ ໜັກແໜ້ນ; ຊຸກຍູ້ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ດ້ວຍການປະຕິບັດນະໂຍບາຍ ແລະ ກົນໄກທີ່ຈຳເປັນໃນການເຂົ້າເຖິງແຫຼ່ງທຶນ, ຕະຫຼາດ ແລະ ນະໂຍບາຍອື່ນໆ ເຮັດໃຫ້ວິສາຫະກິດດັ່ງກ່າວມີຄວາມເຂັ້ມແຂງ;

3. ເອົາໃຈໃສ່ການພັດທະນາຊັບພະຍາກອນມະນຸດໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ແລະ ສາມາດຕອບສະໜອງແກ່ການສ້າງສາພັດທະນາພາຍໃນເມືອງ ເປັນຕົ້ນ ການສ້າງນັກວິຊາການດ້ານການປູກຝັງ-ລ້ຽງສັດ ເພື່ອເຮັດໃຫ້ການຜະລິດກະສິກຳພາຍໃນເມືອງຂະຫຍາຍຕົວ ແລະ ມີຄວາມເຂັ້ມແຂງ; ສຶກສາອົບຮົມໃຫ້ປະຊາຊົນຮັກສາມູນເຊື້ອຄວາມສາມັກຄີປອງດອງ, ນ້ຳໃຈຮັກຊາດ ແລະ ເສຍສະຫຼະເພື່ອຜົນປະໂຫຍດສ່ວນລວມ; ສ້າງສະຕິເຄົາລົບກົດໝາຍ, ການປະຕິບັດພັນທະຂອງປະຊາຊົນ; ເພີ່ມທະວີການເຝິກອົບຮົມສີມືແຮງງານໃຫ້ມີຄຸນນະພາບ, ປະຊາຊົນມີວຽກເຮັດງານທຳ, ມີລາຍຮັບ ແລະ ມີຊີວິດການເປັນຢູ່ທີ່ໝັ້ນຄົງດີຂຶ້ນ;

4. ວຽກງານດ້ານສາທາລະນະສຸກ ສະເໜີໃຫ້ຄະນະພັກ, ອົງການປົກຄອງເມືອງເພີ່ມທະວີຄວາມເອົາໃຈໃສ່ໃຫ້ພໍ່ແມ່ປະຊາຊົນສາມາດເຂົ້າເຖິງການປິ່ນປົວຢ່າງກວ້າງຂວາງ, ສະດວກ ແລະ ມີປະສິດທິພາບ; ເອົາໃຈໃສ່ປັບປຸງໂຮງໝໍເມືອງ, ສຸກສາລາ ດ້ວຍການປະກອບອຸປະກອນ, ເຄື່ອງມືດ້ານການແພດທີ່ສາມາດຍົກສູງປະສິດທິພາບໃນການປິ່ນປົວໃຫ້ສູງຂຶ້ນ; ເພີ່ມຄວາມສາມາດໃນການເຝົ້າລະວັງຕິດຕາມ, ບົ່ງມະຕິ, ຊອກຄົ້ນຫາ ແລະ ໂຕ້ຕອບກໍລະນີພະຍາດລະບາດໃຫ້ໄດ້ໄວ;

5. ປັບປຸງຄຸນນະພາບການສຶກສາໃຫ້ສູງຂຶ້ນ, ເອົາໃຈໃສ່ການສ້າງ ແລະ ສ້ອມແປງໂຮງຮຽນ ເພື່ອອຳນວຍຄວາມສະດວກໃຫ້ແກ່ລູກຫຼານໄດ້ເຂົ້າຮຽນ, ປະກອບປຶ້ມແບບຮຽນ, ອຸປະກອນການຮຽນ ພ້ອມທັງສ້າງເງື່ອນໄຂການເຂົ້າເຖິງການສຶກສາ ແລະ ຂະຫຍາຍຕາໜ່າງການສຶກສາໃຫ້ມີຄຸນນະພາບນັບມື້ສູງຂຶ້ນ ແລະ ທົ່ວເຖິງຢູ່ເຂດຫ່າງໄກສອກຫຼີກ;

6. ປັບປຸງກົງຈັກການຈັດຕັ້ງຕາມທິດກະທັດຮັດ; ສະກັດກັ້ນການນຳໃຊ້ສິດ,ອຳນາດໃນທາງທີ່ບໍ່ຖືກກົດໝາຍຂອງພະນັກງານລັດ; ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ປະຊາຊົນ ມີສ່ວນຮ່ວມເຂົ້າໃນວຽກງານບໍລິຫານລັດ, ສາມາດເຂົ້າເຖິງຂະບວນການຍຸຕິທຳເຮັດໃຫ້ຄວາມເຊື່ອໝັ້ນຂອງປະຊາຊົນ ຕໍ່ການນຳພາຂອງພັກ-ລັດໃຫ້ສູງຂຶ້ນ;

7. ເພີ່ມທະວີການຊີ້ນຳ-ນຳພາຂອງອົງຄະນະພັກເມືອງ ຕໍ່ການເຄື່ອນໄຫວວຽກງານຂອງສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນທີ່ປະຈຳຢູ່ເມືອງນາຊາຍທອງໃຫ້ສາມາດເຄື່ອນໄຫວປະຕິບັດໜ້າທີ່ເປັນຕົວແທນຂອງປະຊາຊົນ ຕາມກົດໝາຍກຳນົດ, ຄົ້ນຄວ້າປະກອບບຸກຄະລາກອນຊ່ວຍວຽກ ລວມທັງສະຖານທີ່ເຮັດວຽກ ແລະ ອຸປະກອນຮັບໃຊ້ການເຄື່ອນໄຫວວຽກງານໃຫ້ມີຄວາມເໝາະສົມ ແນໃສ່ເຮັດໃຫ້ການປະຕິບັດໜ້າທີ່ວຽກງານເຂົ້າສູ່ລະບົບ ແລະ ມີປະສິດທິຜົນນັບມື້ສູງຂຶ້ນ;

8. ສະເໜີ ຄະນະພັກ, ອົງການປົກຄອງເມືອງນາຊາຍທອງ ເພີ່ມທະວີການນຳພາຊີ້ນຳພະນັກງານ, ທະຫານ, ຕຳຫຼວດ ກໍຄືປະຊາຊົນບັນດາເຜົ່າຈັດຕັ້ງປະຕິບັດວາລະແຫ່ງຊາດຢ່າງຕັ້ງໜ້າ ແລະ ຖືເປັນພັນທະຂອງພົນລະເມືອງທຸກຄົນ ເປັນຕົ້ນ ການປະຕິບັດນະໂຍບາຍປະຢັດມັດທະຍັດງົບປະມານຂອງລັດ, ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ກໍເປັນວຽກງານທີ່ສຳຄັນ, ເປັນປາກົດການຫຍໍ້ທໍ້ຂອງສັງຄົມ ສະເໜີໃຫ້ເອົາໃຈໃສ່ສະກັດກັ້ນບັນຫາຢາເສບຕິດ ບໍ່ໃຫ້ເກີດຂຶ້ນ;

9. ຄະນະພັກ, ອົງການປົກຄອງເມືອງ ຈະຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ວຽກງານການກໍ່ສ້າງຮາກຖານການເມືອງ, ລົງໃກ້ຊິດຕິດແທດກັບພໍ່ແມ່ປະຊາຊົນ ຢ່າງແທດເຖິງ;

10. ການກະກຽມກອງປະຊຸມໃຫຍ່ 3 ຂັ້ນ ເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ເຊິ່ງອົງຄະນະພັກເມືອງນາຊາຍທອງ ຈະໄດ້ນຳພາບັນດາຮາກຖານພັກຈັດຕັ້ງປະຕິບັດ ເພື່ອສຸມໃສ່ບັນດາວຽກງານຕ່າງໆ ເປັນຕົ້ນ ການສ້າງຂະບວນການເພື່ອຍູ້ແຮງຂະບວນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI, ມະຕິ, ຄຳສັ່ງຂອງພັກ ກໍຄືມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງ, ມະຕິກອງປະຊຸມໃຫຍ່ອົງຄະນະພັກເມືອງ ໃຫ້ບັນລຸຕາມຄາດໝາຍທີ່ວາງອອກ.

ຫຼັງຈາກນັ້ນ, ທ່ານປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງໄດ້ຢ້ຽມຢາມສູນ ADC ບ້ານອ່າງນ້ຳຫຸມ ເມືອງນາຊາຍທອງ; ສະຖານທີ່ທຳການຜະລິດຂອງເມືອງອີກດ້ວຍ.

## ສຳເລັດ...

(ຕໍ່ຈາກໜ້າ 1)

ສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ສັງລວມເປັນຂໍ້ມູນລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ; ໃນລະຫວ່າງວັນທີ 27 ກຸມພາ-4 ມີນາ 2023, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານກຳມາທິການກົດໝາຍ ພ້ອມດ້ວຍຄະນະ ໄດ້ສຳເລັດການເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ເຜີຍແຜ່ກົດໝາຍ ແລະ ນິຕິກຳ ຢູ່ 3 ແຂວງຄື: ຫົວພັນ, ຊຽງຂວາງ ແລະ ໄຊສົມບູນ ໂດຍມີທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍ ຮ່ວມກັບສະພາປະຊາຊົນແຂວງ ຫົວພັນ, ຊຽງຂວາງ ແລະ ໄຊສົມບູນ, ມີຄະນະກົມ, ຄະນະພະແນກ, ພະແນກການອ້ອມຂ້າງຂອງແຂວງ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນການເຄື່ອນໄຫວເຮັດວຽກຄັ້ງນີ້, ໄດ້ຮັບຟັງການລາຍງານສະພາບລວມໂດຍຫຍໍ້ຂອງແຂວງ; ຈາກນັ້ນ, ບັນດາພະແນກການອ້ອມຂ້າງຂອງແຂວງ ກໍໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປ່າໄມ້, ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ; ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແຮ່ທາດ ຈາກພະແນກພະລັງງານ ແລະ ບໍ່ແຮ່ແຂວງ; ລາຍງານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ ຈາກພະແນກແຜນການ ແລະ ການລົງທຶນແຂວງ; ລາຍງານການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຈາກພະແນກຍຸຕິທຳແຂວງ; ຫຼັງຈາກນັ້ນ, ປະທານກອງປະຊຸມ ໄດ້ເຈາະຈີ້ມບາງບັນຫາໃນການຈັດຕັ້ງປະຕິບັດກົດໝາຍ ແລະ ບັນດາຜູ້ເຂົ້າຮ່ວມ ໄດ້ມີການສົນທະນາແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ ຢ່າງມີຈຸດສຸມ ແລະ ກົງໄປກົງມາ.

ພ້ອມນັ້ນ, ທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍ ໄດ້ເຜີຍແຜ່ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕີຄວາມໝາຍ ແລະ ອະທິບາຍກົດໝາຍ; ຫຼັງຈາກນັ້ນ, ກອງປະຊຸມ ກໍໄດ້ມີການສົນທະນາແລກປ່ຽນຄຳຄິດຄຳເຫັນກັບບັນດາຜູ້ເຂົ້າຮ່ວມຕື່ມອີກ.

ໂອກາດດັ່ງກ່າວ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ກອງປະຊຸມຄັ້ງນີ້ ໄດ້ດຳເນີນດ້ວຍບັນຍາກາດທີ່ຟົດຟື້ນ, ສ້າງສັນ ແລະ ເຕັມໄປດ້ວຍເນື້ອໃນສຳຄັນ, ເລິກເຊິ່ງຫຼາຍດ້ານ ເຮັດໃຫ້ກອງປະຊຸມໄດ້ບັນລຸຜົນສຳເລັດຕາມຈຸດປະສົງທີ່ໄດ້ວາງໄວ້ຢ່າງຈົບງາມ; ການຄົ້ນຄວ້າ, ປະກອບຄຳເຫັນ ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນ ຢ່າງກົງໄປກົງມາ ຂອງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ເຫັນວ່າມີເຫດມີຜົນ, ພາວະວິໄສ ແລະ ແທດເໝາະກັບສະພາບການຕົວຈິງໃນການຂະຫຍາຍຕົວຂອງສະພາບເສດຖະກິດ-ສັງຄົມໃນປັດຈຸບັນ ສັງລວມແລ້ວ ເຫັນວ່າບັນດາທ່ານເຫັນໄດ້ເຖິງຄວາມສຳຄັນ ຂອງວຽກງານຕິດຕາມກວດກາ ແລະ ໂຄສະນາເຜີຍແຜ່ກົດໝາຍ ເຊິ່ງຕ້ອງໄດ້ພ້ອມກັນຕັ້ງໜ້າຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ ເພື່ອຮັບປະກັນໃຫ້ບັນດາຂະແໜງການຕ່າງໆ ຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃຫ້ມີຄວາມເຂັ້ມງວດສັກສິດ; ກອງປະຊຸມ ໄດ້ຮັບຟັງຜູ້ຕາງໜ້າກຳມາທິການກົດໝາຍ ແລະ ຕາງໜ້າຈາກ 4 ພະແນກການ ລາຍງານເນື້ອໃນທີ່ຕິດພັນກັບວຽກງານຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ, ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງສະພາແຫ່ງຊາດໃນຄັ້ງນີ້ ເຊິ່ງໄດ້ຍົກໃຫ້ເຫັນເຖິງຜົນສຳເລັດ ແລະ ທິດທາງຂອງວຽກງານດັ່ງກ່າວໃນຕໍ່ໜ້າ ເພື່ອເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ມີຄວາມເຂັ້ມງວດ, ສັກສິດກວ່າເກົ່າ, ພ້ອມກັນນີ້, ກອງປະຊຸມ ໄດ້ຮັບຟັງການປະກອບຄຳເຫັນທີ່ເປັນປະໂຫຍດຫຼາຍໃຫ້ແກ່ກອງປະຊຸມຄັ້ງນີ້.

ໃນໂອກາດເຄື່ອນໄຫວຄັ້ງນີ້, ຄະນະ ຍັງໄດ້ລົງພື້ນທີ່ຢ້ຽມຢາມໂຄງການຂຸດຄົ້ນແຮ່ຂອງບັນດາບໍລິສັດ ແລະ ຢ້ຽມຊົມສະຖານທີ່ທ່ອງທ່ຽວທາງປະຫວັດສາດຕື່ມອີກຈຳນວນໜຶ່ງ.

(ນາງ ສຸພາວັນ ຫອມສະນິດ)

# ຜົນງານຫຼາຍດ້ານຂອງຄະນະ ສສຊ ແລະ ສະພາສະພາປະຊາຊົນແຂວງວຽງຈັນ

ທ່ານ ບຸນສອນ ຜັດດາວັນ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ທັງເປັນປະທານສະພາປະຊາຊົນແຂວງວຽງຈັນ ໄດ້ໃຫ້ສຳພາດໃນວາລະເຂົ້າຮ່ວມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ຫາເທື່ອທີ 4 ຄະນະ ສສຊ ປະຈຳເຂດເລືອກຕັ້ງ ກໍຄືສະພາປະຊາຊົນແຂວງວຽງຈັນ ສາມາດຍາດໄດ້ຜົນງານທີ່ພົ້ນເດັ່ນດັ່ງນີ້:

**1. ດ້ານນິຕິບັນຍັດ.**

ໄດ້ຕັ້ງໜ້າເຂົ້າຮ່ວມຄົ້ນຄ້ວາກວດກາຄືນແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອຈັດລຽງບູລິມະສິດໃນການພິຈາລະນາຮັບຮອງແຕ່ລະໄລຍະ, ຄົ້ນຄວ້າ ແລະ ຈັດຕັ້ງການປະເມີນຜົນການປະຕິບັດກົດໝາຍຈຳນວນໜຶ່ງໃນຂົງເຂດຍຸຕິທຳ, ຊຸກຍູ້ບັນດາກະຊວງ, ອົງການ ສືບຕໍ່ຄົ້ນຄວ້າ ສ້າງປັບປຸງກົດໝາຍຕ່າງໆໃຫ້ສຳເລັດຕາມແຜນການທີ່ວາງໄວ້ ເຊິ່ງ ສສຊ ແລະ ສສຂ ໄດ້ເຂົ້າຮ່ວມປະກອບຄຳຄິດຄຳເຫັນໃສ່ບັນດາຮ່າງກົດໝາຍສະບັບປັບປຸງ ແລະ ສະບັບສ້າງໃໝ່ ຈຳນວນ 14 ສະບັບ ທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX; ພ້ອມກັນນັ້ນ ສະພາປະຊາຊົນແຂວງວຽງຈັນ ພວກເຮົາກໍໄດ້ເອົາໃຈໃສ່ຊຸກຍູ້ອົງການປົກຄອງແຂວງ ໃນການສ້າງນິຕິກຳໃຕ້ກົດໝາຍທີ່ໄດ້ກຳນົດໄວ້ໃນແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຂອງແຂວງວາງອອກ ເຊິ່ງສາມາດນຳເອົານິຕິກຳໃຕ້ກົດໝາຍຈຳນວນ 2 ສະບັບ ລົງທາບທາມນຳພະນັກງານ, ພໍ່ແມ່ປະຊາ ຊົນ ແລະ ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II.

**2. ດ້ານການຕົກລົງບັນຫາສຳຄັນຂອງຊາດ, ຂອງແຂວງ.**

ໄດ້ຄົ້ນຄວ້າປະກອບຄຳຄິດຄຳເຫັນ, ພິຈາລະນາ ແລະ ຮັບຮອງເອົາແຜນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງປະຈຳ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນ ການ 6 ເດືອນທ້າຍປີ 2022; ຄົ້ນຄວ້າ ແລະ ຮັບຮອງເອົາການສະເໜີຂໍດັດແກ້ລາຍຮັບ-ລາຍຈ່າຍງົບປະມານງວດ IV ແລະ ງົບປະມານໝົດປີ 2022 ຂອງແຂວງວຽງຈັນ; ຄົ້ນຄວ້າ, ພິຈາລະນາກ່ຽວກັບການກຳນົດຫົວໜ່ວຍລາຄາຊົດເຊີຍຜົນກະທົບໂຄງການພັດທະນາກະສິກຳສະອາດປະສົມປະສານການທ່ອງທ່ຽວທຳມະຊາດແບບຍືນຍົງຢູ່ເຂດບ້ານຫ້ວຍຊີ ແລະ ບ້ານຫ້ວຍໝໍ້ ເມືອງວັງວຽງ; ໂຄງການພັດທະນາແຫຼ່ງທ່ອງທ່ຽວຢູ່ເບື້ອງຕາເວັນຕົກຂອງນ້ຳຊອງ ເມືອງວັງວຽງ; ເຂົ້າຮ່ວມຄົ້ນຄ້ວາປຶກສາຫາລືກ່ຽວກັບການສະເໜີຂອງບັນດາບໍລິສັດທີ່ສະເໜີຂໍລົງທຶນພັດທະນາໂຄງການຢູ່ແຂວງວຽງຈັນຈຳນວນ 19 ໂຄງການ; ພິຈາລະນາຮັບຮອງເອົາລາຄາຫົວໜ່ວຍທົດແທນຄ່າເສຍຫາຍໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນຂອງລັດເຊັ່ນ: ໂຄງການຂຸດຄົ້ນຖ່ານຫີນບໍ່ຈ່ານເມືອງຫີນເຫີບ ແລະ ບ້ານດອນເມືອງເຟືອງ, ໂຄງການພັດທະນາແຫຼ່ງທ່ອງທ່ຽວ ແລະ ສະໜາມກ໊ອຟ ອ່າງນ້ຳແຖມ ບ້ານປາກເປາະ, ບ້ານພູດິນແດງ ເມືອງວັງວຽງ; ໂຄງການພັດທະນາແຫຼ່ງທ່ອງທ່ຽວ ຢູ່ອ່າງນ້ຳງື່ມ I ບ້ານແສງສະຫວ່າງ ເມືອງແກ້ວອຸດົມ; ເຂົ້າຮ່ວມໃນການຄົ້ນຄ້ວາ ແລະ ປະກອບຄຳຄິດຄຳເຫັນໃສ່ບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການລາຍງານສະພາບການຄຸ້ມຄອງ ແລະ ຄວບຄຸມສິນຄ້າອຸປະໂພກ-ບໍລິໂພກ ແລະ ນ້ຳ ມັນເຊື້ອໄຟປະຈຳ 6 ເດືອນຕົ້ນປີ 2022 ຕາມທິດທາງແຜນການ 6 ເດືອນທ້າຍປີ 2022; ເຂົ້າຮ່ວມກອງປະຊຸມຄົ້ນຄ້ວາສ້າງແຜນການລົງທຶນຂອງລັດ ປະຈຳປີ 2023 ຂອງແຂວງວຽງຈັນ; ເຂົ້າຮ່ວມກອງປະຊຸມ ປຶກສາຫາລືກ່ຽວກັບຍຸດທະສາດ ການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ແລະ ການບໍລິຫານຈັດການນ້ຳໃນອ່າງຮັບນ້ຳງື່ມ; ພິຈາລະນາຮັບຮອງເອົາການດັດແກ້ ແລະ ຫັກລົບມູນຄ່າການລົງທຶນຂອງລັດຕາມຜົນການກວດກາໂຄງການທີ່ມີມູນຄ່າ ຕ່ຳກວ່າ 20 ຕື້ກີບ ຂອງແຂວງວຽງຈັນ ຈຳນວນ 10 ໂຄງການ.



**3. ດ້ານການຕິດຕາມກວດກາ.**

ໄດ້ຕິດຕາມການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 2-3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຕິດພັນກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ; ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງປະຈຳປີ 6 ເດືອນຕົ້ນປີ ແລະ ປະຈຳປີ 2022; ເຂົ້າຮ່ວມກັບປະທານກຳມາທິການບັນດາເຜົ່າສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງຂອງແຂວງລົງເຄື່ອນໄຫວຕິດຕາມກວດກາການຊົດເຊີຍຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ຢູ່ເມືອງກາສີ, ເມືອງວັງວຽງ ແລະ ເມືອງໂພນໂຮງ.

ໃນໂອກາດດັ່ງກ່າວ, ທ່ານໃຫ້ຮູ້ຕື່ມວ່າ: ຜ່ານການລົງພົບປະຜູ້ມີສິດປ່ອນບັດເລືອກຕັ້ງ ແລະ ຕິດຕາມກວດກາບັນຫາທີ່ເຫັນວ່າປະຊາຊົນສ່ວນຫຼາຍສະເໜີ ທີ່ເປັນບັນຫາຄົງຄ້າງ ທີ່ບໍ່ສາມາດແກ້ໄຂໄດ້ມີດັ່ງນີ້:

ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ເປັນຕົວແທນຂອງຜູ້ມີສິດເລືອກຕັ້ງ ກໍໄດ້ນຳເອົາບັນດາມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ລົງໂຄສະນາເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ-ນັກສຶກສາປັນຍາຊົນຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າໄດ້ທັງໝົດ 80 ຈຸດ, ມີຜູ້ເຂົ້າຮ່ວມ 24.909 ຄົນ ຍິງ 8.171 ຄົນ, ກວມເອົາ 42,78%

ຜ່ານການລົງພົບປະ, ການຕິດຕາມກວດກາບັນຫາທີ່ປະຊາຊົນສະເໜີ ຕໍ່ ສສຊ ແລະ ສສຂ ກໍມີຫຼາຍບັນຫາພໍສົມຄວນໃນນັ້ນບັນຫາທີ່ພົ້ນເດັ່ນ ແລະ ມີການສະເໜີຫຼາຍກວ່າໝູ່ມີຄື: ບັນຫາຄວາມຫຍຸ້ງຍາກທາງດ້ານພື້ນຖານໂຄງລ່າງ ໂດຍສະເພາະເສັ້ນທາງຫຼວງ, ທາງຊອຍເຂົ້າບ້ານ, ຂົວຂ້າມນ້ຳງື່ມ ເມືອງເກົ່າ-ປາກກະຍຸງ ເມືອງວຽງຄຳ; ບັນຫາທາງດ້ານເສດຖະກິດ-ການເງິນ ເປັນຕົ້ນແມ່ນຄ່າຄອງຊີບ ຕາມທ້ອງຕະຫຼາດພຸ່ງຕົວຂຶ້ນສູງ, ເງິນກີບອ່ອນຄ່າ ແລະ ລວມໄປເຖິງຄ່ານ້ຳມັນເຊື້ອໄຟແພງ; ບັນຫາປາກົດການຫຍໍ້ທໍ້ໃນສັງຄົມ ໂດຍສະເພາະບັນຫາຢາເສບຕິດ; ບັນຫາໂກຕ້າລັດຖະກອນທີ່ເປັນອາສາສະໝັກຫຼາຍປີ; ບັນຫາທີ່ດິນທີ່ຖືກຜົນກະທົບຈາກການກໍ່ສ້າງເສັ້ນທາງລົດໄຟ-ດ່ວນ ບາງເຂດແມ່ນຍັງບໍ່ທັນໄດ້ຮັບການຊົດເຊີຍ, ຂໍ້ຂັດແຍ່ງທີ່ດິນ ລະຫວ່າງຜູ້ປະກອບການ ກັບປະຊາຊົນທີ່ຢາກທຳການຜະລິດ, ຂໍ້ຂັດແຍ່ງທີ່ດິນລະຫວ່າງປະຊາຊົນກັບປະຊາຊົນ ແລະ ເນື້ອທີ່ດິນ ທີ່ຖືກຜົນກະທົບຈາກການຂຸດຄົ້ນແຮ່ ລວມໄປເຖິງການເຊົ່າສຳປະທານຈາກຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ.

# ຄະນະສະມາຊິກສະພາແຫ່ງຊາດ ເຂດ 5 ຈັດກອງປະຊຸມປະຈຳປີ 2022

(ສພຊ) ກອງປະຊຸມປະຈຳປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ໄດ້ຈັດຂຶ້ນໃນວັນທີ 20 ກຸມພາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ມີຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງ, ການນຳຂອງແຂວງ, ພະແນກການ, ອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ຈອມສີ ລັດຕະນະປັນ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ປະທານກອງປະຊຸມໄດ້ກ່າວວ່າ: ກອງປະຊຸມຄັ້ງນີ້ ແມ່ນຈະໄດ້ຮັບຟັງການລາຍງານໂດຍຫຍໍ້ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX, ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຮ່າງມະຕິກອງປະຊຸມປະຈຳປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ເພື່ອເປັນການສະຫຼຸບຕີລາຄາຄືນຕໍ່ຜົນການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາ ຊອກໃຫ້ເຫັນດ້ານດີ, ດ້ານອ່ອນ ຂໍ້ຄົງຄ້າງ ໃນການເປັນບ່ອນອີງ ສືບຕໍ່ປັບປຸງແກ້ໄຂໃນຕໍ່ໜ້າ ເຮັດໃຫ້ການປະຕິບັດພາລະບົດບາດແລະໜ້າທີ່ເປັນຕົວແທນສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໃຫ້ມີປະສິດທິພາບຂຶ້ນເລື້ອຍໆ.



ທ່ານ ພັອ. ທຸມແພງ ອິນທະຈັກ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ໄດ້ລາຍງານຫຍໍ້ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຜ່ານຮ່າງບົດສະຫຼຸບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວ ປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ.

ທ່ານ ບຸນພັດ ສີສົມບັດ ເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານຮ່າງມະຕິຂອງກອງປະຊຸມ ປະຈຳປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ເພື່ອໃຫ້ບັນດາຄະນະສະມາຊິກສະພາແຫ່ງຊາດ ແລະ ຜູ້ເຂົ້າຮ່ວມປະກອບຄຳເຫັນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດພາລະບົດບາດໜ້າທີ່ວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໃຫ້ມີປະສິດທິພາບ, ເຊີດຊູບົດບາດຂອງສະພາແຫ່ງຊາດສູງຂຶ້ນ ກາຍເປັນອົງການນິຕິບັນຍັດທີ່ເຂັ້ມແຂງ ແລະ ສົມເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ການເຄື່ອນໄຫວຈັດຕັ້ງປະຕິບັດທິດທາງວຽກງານປະຈຳປີ 2023 ໃຫ້ປາກົດຜົນເປັນຈິງ.

(ນາງ ຂັນຖະໜອມ ແກ້ວມະນີ)

# ພົບປະຜູ້ມີສິດເລືອກຕັ້ງ ຂົງເຂດທະນາຄານ



(ສພຊ) ຕອນເຊົ້າຂອງວັນທີ 23 ກຸມພາ 2023 ຢູ່ທີ່ຫ້ອງປະຊຸມທະນາຄານແຫ່ງ ສປປລາວ ພາກເໜືອແຂວງອຸດົມໄຊ ໄດ້ຈັດພິທີພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະມາຊິກສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4, ປະທານສະພາປະຊາຊົນແຂວງ ແລະ ທ່ານ ນາງ ທຸມມາ ປັນຍາສິດ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງໄຊ, ມີຄະນະປະຈຳສະພາປະຊາຊົນແຂວງ, ບັນດາທ່ານຄະນະພັກສາຂາທະນາຄານທຸລະກິດ, ສະຖາບັນການເງິນ ແລະ ພະນັກງານຫຼັກແຫຼ່ງອ້ອມຂ້າງສາຂາທະນາຄານທຸລະກິດເຂົ້າຮ່ວມ.

ໃນພິທີ, ທ່ານ ເສີມທະວີ ສີຫາຝົນ ຮັກສາການຫົວໜ້າທະນາຄານແຫ່ງ ສປປລາວ ພາກເໜືອແຂວງອຸດົມໄຊ ໄດ້ລາຍງານໂດຍຫຍໍ້ກ່ຽວກັບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປລາວ ພາກເໜືອແຂວງອຸດົມໄຊ ໃນໄລຍະຜ່ານມາ.

ຫຼັງຈາກນັ້ນ, ທ່ານ ຄຳດີ ວົງລ້ອມ ໄດ້ເຜີຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານໃຫ້ຮູ້ວ່າ: ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງຊາດ ໂດຍໄດ້ອອກເປັນມະຕິກອງປະຊຸມ ຈຳນວນ 21 ສະບັບ ເປັນຕົ້ນແມ່ນມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2021; ການຈັດຕັ້ງປະຕິບັດແຜນງົບປະມານ ປີ 2022 ແລະ ທິດທາງການສ້າງແຜນງົບປະມານແຫ່ງລັດ ປີ 2023; ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ແຜນການປະຈຳປີ 2023; ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງ ທ່ານ ສອນໄຊ ສີພັນດອນ ເປັນນາຍົກລັດຖະມົນຕີແຫ່ງ ສປປລາວ ຜູ້ໃໝ່.

ພ້ອມນັ້ນ, ທ່ານ ນາງ ທຸມມາ ປັນຍາສິດ ກໍໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາສະພາປະຊາຊົນແຂວງ ຊຸດທີ II ວ່າ: ກອງປະຊຸມຄັ້ງນີ້ໄດ້ພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນສຳຄັນພື້ນຖານຂອງແຂວງ ເປັນຕົ້ນແມ່ນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ພິຈາລະນາ, ຮັບຮອງເອົາການສ້າງນິຕິກຳຂອງອົງການປົກຄອງແຂວງຈຳນວນ 4 ສະບັບ ຄື: ຂໍ້ຕົກລົງວ່າດ້ວຍການນຳໃຊ້ນ້ຳ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຢາປາບສັດຕູພືດ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຄ່າທຳນຽມ ແລະ ຄ່າບໍລິການ, ຂໍ້ຕົກລົງວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ ແລະ ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງຫົວໜ້າພະແນກ ແລະ ອົງການອົງການອີກຈຳນວນໜຶ່ງ.

ໂອກາດດັ່ງກ່າວ, ບັນດາທ່ານທີ່ເຂົ້າຮ່ວມ ຍັງໄດ້ມີຄຳເຫັນແລກປ່ຽນ ແລະ ຊີ້ແຈງກ່ຽວກັບຄຳສະເໜີຂອງປະຊາຊົນ ກ່ຽວກັບການຄຸ້ມຄອງເງິນຕາ, ການປ່ອຍເງິນກູ້ ແລະ ບັນຫາອື່ນໆ ເພື່ອໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງມີຄຳເຫັນຊີ້ແຈງ, ຕອບຄຳຂັດຂ້ອງໃຈຕໍ່ປະຊາຊົນ.

(ແສງພອນ ອິນນະລົງ)

# ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງຫົວພັນ

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງຫົວພັນ ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ໃນຕອນແລງວັນທີ 17 ກຸມພາ 2023 ພາຍຫຼັງທີ່ດຳເນີນມາເປັນເວລາ 3 ວັນເຕັມ ພາຍໃຕ້ການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານສະພາປະຊາຊົນ ແຂວງຫົວພັນ; ເຂົ້າຮ່ວມໂດຍທ່ານວັນໄຊແພງຊຸມມາກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງຫົວພັນ, ມີບັນດາທ່ານຄະນະປະຈຳພັກແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ, ສະມາຊິກສະພາປະຊາຊົນແຂວງ, ອະດີດຄະນະປະຈຳພັກແຂວງ, ອະດີດສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ພະແນກການ, ອົງການທຽບເທົ່າ, ສອງກອງບັນຊາການ ແລະ ພາກສ່ວນທຸລະກິດຕ່າງໆເຂົ້າຮ່ວມ.



ກອງປະຊຸມໄດ້ເສີມຂະຫຍາຍສິດປະຊາທິປະໄຕຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງໃນການພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນສຳຄັນທີ່ມາພິຈາລະນາ ແລະ ຮັບຮອງໃນກອງປະຊຸມ ຄື: ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານປີ 2022 ແລະທິດທາງແຜນການປີ 2023 ຂອງອົງການປົກຄອງແຂວງ; ການເຄື່ອນໄຫວວຽກງານ ຂອງອົງການກວດສອບພາກເໜືອປີ 2022 ແລະ ທິດທາງແຜນການປີ 2023 ຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານຂອງແຂວງຫົວພັນ ປີ 2021; ຜົນຂອງການກວດກາຂອງອົງການກວດກາລັດແຂວງ ປີ 2022 ແລະ ທິດທາງແຜນການ ປີ 2023; ຂໍ້ຕົກລົງ ຂອງທ່ານເຈົ້າແຂວງ ວ່າດ້ວຍກອງທຶນ ຄວບຄຸມ-ສະກັດກັ້ນ ແລະ ຕ້ານຢາເສບຕິດຂອງແຂວງຫົວພັນ; ເອົາການເຄື່ອນໄຫວວຽກງານຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຂວງຫົວພັນ ປີ 2022 ແລະ ທິດທາງແຜນການປີ 2023; ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງປີ 2022 ແລະທິດທາງແຜນການປີ 2023 ແລະ ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ຢູ່ແຂວງຫົວພັນປີ 2022 ແລະ ທິດທາງແຜນການ ປີ 2023.

ນອກຈາກນີ້, ກອງປະຊຸມຍັງໄດ້ຮັບຟັງການຊີ້ແຈງຕໍ່ຄຳເຫັນ, ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ກໍຄືຄຳຄິດຄຳເຫັນຂອງປະຊາຊົນບັນດາເຜົ່າໃນທົ່ວແຂວງ ທີ່ມີຄວາມສົນໃຈຈາກເຈົ້າແຂວງ, ບັນດາພະແນກການກ່ຽວຂ້ອງຂອງແຂວງ, ຫົວໜ້າອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ.

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ຮັບຜົນສຳເລັດຢ່າງຈົບງາມ ກໍຍ້ອນການຊີ້ນຳຢ່າງໃກ້ຊິດຂອງຄະນະປະຈຳພັກແຂວງ ແລະ ຄວາມຮັບຜິດຊອບຂອງອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ສະໜອງຂໍ້ມູນ, ເອກະສານບົດລາຍງານທີ່ມີເນື້ອໃນສຳຄັນໃຫ້ແກ່ສະພາປະຊາຊົນແຂວງໄດ້ຄົ້ນຄວ້າ ແລະ ປະກອບຄວາມເຫັນຢ່າງເລິກເຊິ່ງ ແລະ ກ້າວໄປເຖິງການພິຈາລະນາຮັບຮອງເອົາ.

(ເວີນ ແກ້ວບຸນມີ)

# ພົບປະຜູ້ມີສິດເລືອກຕັ້ງ ຢູ່ ກອງຮ້ອຍ 541



(ສພຊ) ພາຍຫຼັງສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນແຂວງອັດຕະປືຊຸດທີ II ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງອັດຕະປື ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຢູ່ເຂດເລືອກຕັ້ງເມືອງຊານໄຊ ແຂວງອັດຕະປື ໃນວັນທີ 28 ກຸມພາ 2023 ໂດຍການນຳພາຂອງທ່ານ ນາງ ພອນມະນີ ຂຽນໄຊຍະວົງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 17, ຮອງປະທານສະພາປະຊາຊົນແຂວງ, ມີທ່ານ ບຸນເນັ່ມ ໄຊຍະເສັ້ມ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ພ້ອມດ້ວຍຄະນະ ລົງພົບປະຜູ້ມີສິດເລືອກຕັ້ງ ຢູ່ ກອງຮ້ອຍ 541 ມີກຳລັງປ້ອງກັນຊາດ ແລະ ອຳນາດການປົກຄອງບ້ານອ້ອມຂ້າງເຂົ້າຮ່ວມ 36 ກວ່າຄົນ.

ທັງນີ້, ແມ່ນປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ, ສະພາປະຊາຊົນແຂວງ ເພື່ອຮັບປະກັນໃຫ້ແກ່ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາປະຊາຊົນແຂວງ ແລະ ສະມາຊິກສະປະຊາຊົນແຂວງໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງໃນການການລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມ, ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຢູ່ຂັ້ນເມືອງ ແລະ ຂັ້ນບ້ານ ຕິດພັນກັບການຜັນຂະຫຍາຍ ມະຕິ XI ຂອງພັກ ແລະ ມະຕິ ກອງປະຊຸມຄົບຄະນະບໍລິຫານງານພັກແຂວງ, ມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ແລະ ການເກັບກຳຄຳຄິດຄຳເຫັນຂອງປະຊາຊົນ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ.

(ນາງ ຈັນທະຈອນ)

## ຮອງປະທານສະພາປະຊາຊົນແຂວງບໍລິຄຳໄຊ ພົບປະ-ປະຊາຊົນ ຢູ່ເມືອງປາກກະດິງ



(ສພຊ) ວັນທີ 21 ກຸມພາ 2023 ທ່ານ ໃສຄຳ ທອງລັດ ຮອງປະທານສະພາປະຊາຊົນແຂວງບໍລິຄຳໄຊ ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງປາກກະດິງ, ພະແນກການທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວພົບປະ-ປະຊາຊົນ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ທີ່ບ້ານນ້ຳທອນ-ບ້ານຄອນສິງ ເມືອງປາກກະດິງ.

ການພົບປະ-ປະຊາຊົນໃນຄັ້ງນີ້ ປະຊາຊົນທັງສອງບ້ານ ໄດ້ເອົາໃຈໃສ່ເຂົ້າຮ່ວມຢ່າງເປັນຂະບວນຟົດຟື້ນ; ພ້ອມນີ້, ຍັງໄດ້ແລກປ່ຽນຄຳຄິດ-ຄຳເຫັນ, ຄຳສະເໜີຕໍ່ສະມາຊິກສະພາປະຊາຊົນແຂວງ ນຳໄປຄົ້ນຄວ້າພິຈາລະນາ ແລະ ສະເໜີຕໍ່ອົງການປົກຄອງແຂວງ-ເມືອງ ເພື່ອແກ້ໄຂ ແລະ ອະທິບາຍ-ຊີ້ແຈງ ໃຫ້ປະຊາຊົນຮັບຊາບໂດຍປະຕິບັດຕາມພາລະບົດບາດສິດ ແລະ ໜ້າທີ່ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

ໃນລະຫວ່າງວັນທີ 20-21 ກຸມພາ 2023 ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ແລະ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງທ່າພະບາດ ນຳໂດຍທ່ານ ເລື່ອນວິໄລ ຈັນທະລາພັນ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດຕັ້ງທີ 11 ແຂວງບໍລິຄຳໄຊ, ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ພົບປະ-ປະຊາຊົນ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ຢູ່ບ້ານປາກທວາຍ ແລະ ບ້ານພະບາດໂພນສັນ, ມີຄະນະຕິດຕາມຈາກພະແນກການ, ຫ້ອງການທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ ພ້ອມດ້ວຍອຳນາດການປົກຄອງ, ການຈັດຕັ້ງບ້ານ, ເຖົ້າແກ່ແນວໂຮມ, ປະຊາຊົນບັນດາເຜົ່າ ຜູ້ມີສິດເລືອກຕັ້ງພາຍໃນບ້ານ ເຂົ້າຮ່ວມຈຳນວນຫຼາຍ, ພ້ອມນີ້ ຍັງໄດ້ຮັບຟັງການລາຍງານສະພາບການທີ່ພົ້ນເດັ່ນຂອງບ້ານ ແລະ ຮັບເອົາຄຳຄິດຄຳເຫັນ, ຄຳສະເໜີ, ຄວາມຂັດຂ້ອງໝອງໃຈຂອງປະຊາຊົນ ເພື່ອນຳໄປຄົ້ນຄວ້າພິຈາລະນາ ແລະ ສະເໜີຕໍ່ອົງການປົກຄອງແຂວງ-ເມືອງ ເພື່ອແກ້ໄຂ ແລະ ອະທິບາຍ-ຊີ້ແຈງ ໃຫ້ປະຊາຊົນຮັບຊາບ.

ໂອກາດດັ່ງກ່າວ, ຮອງປະທານ ແລະ ຄະນະຍັງໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຢ້ຽມຢາມໂຮງງານຜະລິດໄມ້ອັດຂອງບໍລິສັດ ໂຢຮາວ, ໂຮງງານຜະລິດແປ້ງມັນຕົ້ນ-ແປ້ງສາລີ ທີ່ບ້ານທົ່ງນາມີ ເມືອງປາກກະດິງອີກດ້ວຍ.

(ແສງເງິນ ຊາມຸນຕີ)

## ສະພາປະຊາຊົນແຂວງຊຽງຂວາງ ໄດ້ຮັບໂທລະໂຄ່ງຈາກພະແນກສາທາລະນະສຸກແຂວງ

(ສພຊ) ໃນໄລຍະລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ແລະ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II, ສະພາປະຊາຊົນແຂວງຊຽງຂວາງ ໄດ້ຮັບຄຳສະເໜີຂໍໂທລະໂຄ່ງຈາກປະຊາຊົນຢູ່ບັນດາເມືອງຂອງແຂວງ; ໃນວັນທີ 2 ກຸມພາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ, ສະພາປະຊາຊົນແຂວງໄດ້ຮັບການອຸປະຖຳໂທລະໂຄ່ງຈາກພະແນກສາທາລະນະສຸກແຂວງ ໂດຍໄດ້ຮັບການລະດົມຂົນຂວາຍຂອງສະມາຊິກສະພາປະຊາຊົນແຂວງ ເຊິ່ງກ່າວມອບໃນຄັ້ງນີ້ ແມ່ນທ່ານ ດຣ. ເຢ້ຢ່າງ ຮອງຫົວໜ້າພະແນກສາທາລະນະສຸກແຂວງ ແລະ ກ່າວຮັບໂດຍທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງຊຽງຂວາງ; ເຂົ້າຮ່ວມເປັນສັກຂີພິຍານມີບັນດາທ່ານ ຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານສະພາປະຊາຊົນແຂວງເຂົ້າຮ່ວມໃນຄັ້ງນີ້.

ເຄື່ອງທີ່ນຳມອບ-ຮັບຄັ້ງນີ້ ມີໂທລະໂຄ່ງ ຈຳນວນ 2 ຊຸດມູນຄ່າທັງໝົດ 24,9 ກວ່າກີບ ເພື່ອນຳໄປມອບໃຫ້ 1 ບ້ານຢູ່ເມືອງຄູນ ແລະ ອີກ 1 ບ້ານຢູ່ເມືອງໝອກ ເພື່ອນຳໃຊ້ເຂົ້າໂຄສະນາວຽກງານຕ່າງໆທີ່ສຳຄັນຢູ່ພາຍໃນບ້ານ.

ທ່ານ ວຽງໄຊ ສີວິໄລ ຍັງໄດ້ກ່າວສະແດງຂອບໃຈຕໍ່ທ່ານ ດຣ. ເຢ້ຢ່າງ ກໍຄືພະແນກສາທາລະນະສຸກແຂວງ ທີ່ໄດ້ນຳເອົາເຄື່ອງມາມອບໃຫ້ ເຊິ່ງເປັນການຍົກສູງພາລະບົດບາດຂອງສະພາປະຊາຊົນແຂວງອີກບາດກ້າວໜຶ່ງ ແລະ ທັງເປັນການຊ່ວຍຜັນຂະຫຍາຍວຽກງານຕ່າງໆຂອງພັກ-ລັດໃຫ້ປະຊາຊົນໄດ້ຮັບຮູ້ ແລະ ທ່ານຍັງໃຫ້ຄຳໝັ້ນສັນຍາວ່າຈະນຳອຸປະກອນດັ່ງກ່າວ ໄປມອບໃຫ້ບ້ານທີ່ມີຄວາມຄວາມຕ້ອງການ ແລະ ຈຳເປັນທີ່ສຸດ.

(ນາງ ສຸກສະຫວັນ ອິນທະແສງ)

## ປາຖະກະຖາວັນແມ່ຍິງສາກົນ ຄົບຮອບ 113 ປີ

(ສພຊ) ຕອນເຊົ້າວັນທີ 28 ກຸມພາ 2023 ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ຈັດພິທີປາຖະກະຖາມູນເຊື້ອວັນແມ່ຍິງສາກົນທີ 8 ມີນາ ຄົບຮອບ 113 ປີ ກໍຄືວັນທີ 8 ມີນາ 1910-8 ມີນາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ນາງ ເກສອນ ແສງຍະວົງ ປະທານຄະນະກຳມະການວັດທະນະທຳ-ສັງຄົມແລະບັນດາເຜົ່າ ສະພາປະຊາຊົນແຂວງ ທັງເປັນຄະນະບໍລິຫານງານສະຫະພັນແມ່ຍິງແຂວງ ຜູ້ຊີ້ນຳຂົງເຂດຕຸລາການ ແລະ ສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍທ່ານ ນາງ ອຸ່ນຫຼ້າ ອ້ຽງລໍລາດ ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນຊາວໜຸ່ມ, ກຳມະບານ, ສະມາຊິກສະຫະພັນແມ່ຍິງໃນຮາກຖານສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ນາງ ເກສອນ ແສງຍະວົງ ໄດ້ປາຖະກະຖາປະຫວັດຄວາມເປັນມາມູນເຊື້ອວັນແມ່ຍິງສາກົນໄດ້ຊີ້ໃຫ້ເຫັນເຖິງການກຳເນີດເກີດຂຶ້ນໃນທ່າມກາງສະພາບເສດຖະກິດສັກດີນາ ແລະ ນາຍທຶນແຕ່ຊ້ຳພັດຍິ່ງເພີ່ມຄວາມທຸກຍາກລຳບາກໃຫ້ແກ່ຊາວຜູ້ອອກແຮງງານ ໂດຍສະເພາະແມ່ນກຳມະກອນເພດຍິງຖືກກົດຂີ່ຂູດຮີດຢ່າງໜັກໜ່ວງຄືເຮັດວຽກຫລາຍຊົ່ວໂມງແຕ່ແຮງງານຕ່ຳ, ບໍ່ຄ້ຳປະກັນດ້ານສຸຂະພາບຖືກດູໝິ່ນປະໝາດຖືເປັນສິນຄ້າ ເປັນເຄື່ອງຫຼິ້ນຖືກຂົ່ມຂືນ, ທຸບຕີ ແລະ ໄລ່ອອກວຽກເວລາຖືພາ, ບໍ່ໄດ້ຮັບການປິ່ນປົວເວລາເຈັບເປັນຕ່າງໆ.



## ຕີລາຄາການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈຳປີ 2022



(ສພຊ) ຕອນບ່າຍວັນທີ 28 ກຸມພາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຜົ້ງສາລີ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ໂດຍການເປັນປະທານຂອງທ່ານ ສົມຈິດ ຫັບລະກອນ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ມີບັນດາທ່ານ ຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການ, ຮອງເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ຈັດຂຶ້ນເພື່ອຕີລາຄາຜົນການຊີ້ນຳການຈັດຕັ້ງປະຕິບັດວຽກງານຂອງຄະນະປະຈຳສະພາປະຊາຊົນແຂວງ ໃນ 1 ປີຜ່ານມາເພື່ອຮັບປະກັນໃຫ້ການວາງທິດທາງແຜນການ ປະຈຳປີ 2023 ມີຄວາມສອດຄ່ອງທາງດ້ານຫຼັກການ, ກົດໝາຍ ແລະ ສະພາບຄວາມເປັນຈິງ ໃນການນຳພາ-ຊີ້ນຳຂອງຄະນະປະຈຳສະພາປະຊາຊົນແຂວງ ໃນປີ 2023 ທັງນີ້, ກໍເພື່ອເຮັດໃຫ້ວຽກຂອງສະພາປະຊາຊົນແຂວງໄດ້ຮັບປະສິດທິຜົນ ແລະ ມີຄຸນນະພາບ ໃນການຈັດຕັ້ງປະຕິບັດ.

ກອງປະຊຸມໄດ້ຮັບຟັງທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການສະພາປະຊາຊົນແຂວງ ຜ່ານບົດສະຫຼຸບການຊີ້ນຳຈັດຕັ້ງປະຕິບັດວຽກງານປະຈຳເດືອນກຸມພາ ແລະ ແຜນການວຽກງານຈຸດສຸມ ປະຈຳເດືອນມີນາ 2023 ຂອງຄະນະປະຈຳສະພາປະຊາຊົນແຂວງ; ຜ່ານບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສະພາປະຊາຊົນແຂວງ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ຜັດປ່ຽນກັນປະກອບຄຳເຫັນໃສ່ເນື້ອໃນດັ່ງກ່າວ.

ຕອນທ້າຍ, ກອງປະຊຸມ ປະທານກອງປະຊຸມສັງລວມຄືນຜົນກອງປະຊຸມຄັ້ງນີ້ ພ້ອມຮຽກຮ້ອງໃຫ້ຄະນະນຳ ແລະ ພະນັກງານ-ລັດຖະກອນ ເອົາໃຈໃສ່ຍົກສູງຄວາມຮັບຜິດຕໍ່ໜ້າທີ່ການເມືອງທີ່ໄດ້ຮັບການມອບໝາຍ; ເອົາໃຈໃສ່ຊອກຮູ້ຮ່ຳຮຽນດ້ານນິກຳຕ່າງໆ ລວມທັງຄວາມຮູ້ທາງດ້ານເທັກໂນໂລຊີ ເພື່ອໃຫ້ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງຂອງໜ້າທີ່ການເມືອງໃນໄລຍະໃໝ່; ເອົາໃຈໃສ່ຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ເປັນພະນັກງານທີ່ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຄຸນສົມບັດສົມທຳປະຕິວັດ ແລະ ເປັນແບບຢ່າງທີ່ດີໃຫ້ແກ່ມະຫາຊົນ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)




# ກົດໝາຍ
# ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ພາກທີ VI**
**ການຄຸ້ມຄອງ ແລະ ການກວດກາ**
**ໝວດທີ 1**
**ການຄຸ້ມຄອງວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ**

**ມາດຕາ 54 ອົງການຄຸ້ມຄອງວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ ປະກອບດ້ວຍ:

1. ກະຊວງປ້ອງກັນປະເທດ;
2. ກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນປະເທດ**

ໃນການຄຸ້ມຄອງວຽກງານ ອາວຸດ ແລະ ວັດຖຸລະເບີດ ກະຊວງປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ມາເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ;
4. ປ້ອງກັນ, ສະກັດກັ້ນ ແລະ ຕ້ານ ການກໍ່ອາຊະຍາກຳ ແລະ ການ ຊື້ ຂາຍ ອາວຸດ ແລະ ວັດຖຸລະເບີດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ທຸກຮູບແບບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ອະນຸຍາດ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບອາວຸດ ແລະ ວັດຖຸລະເບີດ;
6. ອະນຸຍາດນຳໃຊ້ດອກໄມ້ໄຟ ເຂົ້າໃນການ ສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງຊາດ;
7. ຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ໃນທົ່ວກຳລັງປ້ອງກັນຊາດ;
8. ຊີ້ນຳ ການປະກອບ ແລະ ການນຳໃຊ້ອາວຸດ ໃນທົ່ວກຳລັງປ້ອງກັນຊາດ;
9. ເກັບກຳ, ທ້ອນໂຮມ, ສັງລວມ, ຂຶ້ນບັນຊີ ກ່ຽວກັບອາວຸດເສິກ, ອາວຸດກິລາ ແລະ ອາວຸດພື້ນເມືອງ ໃນທົ່ວກຳລັງປ້ອງກັນຊາດ ລວມທັງ ວັດຖຸລະເບີດທາງອຸດສາຫະກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
10. ດຳເນີນການສືບສວນ-ສອບສວນ ແລະ ດຳເນີນຄະດີຕາມກົດໝາຍ ຕໍ່ກຳລັງປ້ອງກັນຊາດທີ່ນຳໃຊ້ອາວຸດ ແລະ ວັດຖຸລະເບີດ ທີ່ເປັນການລະເມີດກົດໝາຍ ໂດຍສະເພາະການກະທຳຜິດທາງການທະຫານ ຊຶ່ງແຕະຕ້ອງເຖິງຄວາມສະຫງົບທາງດ້ານການເມືອງ ແລະ ຄວາມໝັ້ນຄົງຂອງຊາດ;
11. ນຳໃຊ້ມາດຕະການສະກັດກັ້ນ ແລະ ດຳເນີນການສືບສວນ-ສອບສວນເບື້ອງຕົ້ນ ກ່ຽວກັບການນຳໃຊ້ອາວຸດ ແລະ ວັດຖຸລະເບີດ ຂອງບຸກຄົນອື່ນທີ່ລະເມີດກົດໝາຍ ຫຼື ສິ່ງຜົນກະທົບຕໍ່ຊີວິດ ແລະ ຊັບສິນຂອງພົນລະເມືອງ ເພື່ອສົ່ງໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ ດຳເນີນຄະດີຕາມກົດໝາຍ;
12. ຄຸ້ມຄອງ, ຕິດຕາມ ກວດກາ ບັນດາຫົວໜ່ວຍທຸລະກິດ ກ່ຽວກັບວັດຖຸລະເບີດທາງອຸດສາຫະກຳ;
13. ຝຶກອົບຮົມ, ບຳລຸງ, ຍົກລະດັບ ກ່ຽວກັບວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
14. ປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ;
15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ;
16. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ຕໍ່ລັດຖະບານ;
17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານ ອາວຸດ ແລະ ວັດຖຸລະເບີດ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ມາເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງອາວຸດ ແລະ ວັດຖຸລະ ເບີດ;
4. ປ້ອງກັນ, ສະກັດກັ້ນ ແລະ ຕ້ານການກໍ່ອາຊະຍາກຳ ແລະ ການຊື້ ຂາຍ ອາວຸດ ແລະ ວັດຖຸລະເບີດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ທຸກຮູບແບບ ໃນສັງຄົມ;
5. ຄວບຄຸມ, ຕິດຕາມ ກວດກາ ການຜະລິດ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ຈຳໜ່າຍ ແລະ ນຳໃຊ້ອາວຸດ ແລະ ວັດຖຸລະເບີດ ພ້ອມທັງນຳໃຊ້ມາດຕະການແກ້ໄຂຕາມກົດໝາຍ ແລະ ລະບຽບການ ໃນກໍລະນີມີການລະເມີດ;
6. ຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ໃນກຳລັງປ້ອງກັນຄວາມສະຫງົບ ແລະ ສັງຄົມ;
7. ຊີ້ນຳການປະກອບ ແລະ ການນຳໃຊ້ ອາວຸດ ໃນກຳລັງປ້ອງກັນຄວາມສະຫງົບ;
8. ເກັບກຳ, ສັງລວມ, ຂຶ້ນບັນຊີ ກ່ຽວກັບ ອາວຸດເສິກ, ອາວຸດກິລາ ແລະ ອາວຸດພື້ນເມືອງ ທີ່ບໍ່ຖືກຕ້ອງຕາມກົດໝາຍ ເພື່ອເກັບກູ້ ແລະ ທ້ອນໂຮມ;
9. ນຳໃຊ້ມາດຕະການສະກັດກັ້ນ ແລະ ດຳເນີນການສືບສວນ-ສອບສວນ ກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ ທີ່ລະເມີດກົດໝາຍ ຫຼື ສິ່ງຜົນກະທົບ ຕໍ່ ຊີວິດ, ສຸຂະພາບ, ຊັບສິນ ຂອງພົນລະເມືອງ ແລະ ສິ່ງແວດລ້ອມ;
10. ຂຶ້ນທະບຽນ, ອອກ ແລະ ຖອນ ໃບອະນຸຍາດນຳໃຊ້ ອາວຸດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

ອ່ານຕໍ່ສະບັບໜ້າ...




## ວິທີເຮັດວຽກ

ພະຍາດໃນເຮົາ, ພະຍາດໃຈແຄບ: ພະຍາດຂີ້ຖີ່ ແລະ ອື່ນໆນັ້ນ ແຕ່ລະພະຍາດແມ່ນສັດຕູຕົວໜຶ່ງຂອງເຮົາ ສັດຕູພາຍໃນຕົວເຮົາແຕ່ລະຕົວ ກໍແມ່ນພັນທະມິດຂອງສັດຕູພາຍນອກ, ສັດຕູພາຍນອກ ບໍ່ເປັນໜ້າຢ້ານ ສັດຕູພາຍໃນ ເປັນໜ້າຢ້ານກວ່າ, ເພາະມັນມ້າງເພພາຍໃນອອກໄປ ເພາະສະນັ້ນ ພວກເຮົາຈຶ່ງຕ້ອງອອກແຮງ ລະວັງຕົວຕໍ່ສັດຕູພາຍໃນດັ່ງກ່າວນັ້ນ ຕ້ອງຊຸດເກົາເຜົາລ້າງພະຍາດເຫຼົ່ານັ້ນອອກຈາກຕົວເຮົາໃຫ້ໝົດກ້ຽງ.

ເວລາພວກເຮົາ ພົບບັນຫາຫຍັງ ກໍຕ້ອງຕັ້ງຄຳຖາມຕົວເອງ ດັ່ງນີ້:

- ເປັນຫຍັງຈຶ່ງເກີດບັນຫານີ້ຂຶ້ນ.
- ຈະເຮັດແນວໃດດີ ຜົນຂອງການເຮັດຂອງເຮົາຈະເປັນແນວໃດ?

ຕ້ອງພິຈາລະນາຖີ່ຖ້ວນ ຢ່າໄດ້ຟ້າວຟັ່ງ, ຢ່າຫອບຫາວເຮັດໂລເລ ຢ່າສ່ຽງໄພ, ຢ່າເຮັດຕາມມີຕາມເກີດ ຖ້າບໍ່ຕັດສິນໃຈຢ່າຟ້າວເຮັດ

ເພື່ອຈະປົວພະຍາດເຫຼົ່ານັ້ນໃຫ້ຫາຍໄດ້ ພວກເຮົາແຕ່ລະຄົນ ຕ້ອງຕຳໜິຕົນເອງຢ່າງຂະຫຍັນຂັນແຂງ ແລະ ຕ້ອງເອົາໃຈໃສ່ຮັກແພງ ແລະ ເອົາໃຈຊື່ສັດໄປຕຳໜິເພື່ອນສະຫາຍເຮົາຢ່າງຂະຫຍັນຂັນແຂງຄືກັນ. ການຕຳໜິສອງຢ່າງນັ້ນ ຕ້ອງເດີນຄຽງຄູ່ກັນ. ໃນເວລາຕຳໜິນັ້ນ, ຂໍ້ບົກພ່ອງມີຫຍັງຕ້ອງເວົ້າອອກມາຢ່າງຈະແຈ້ງ ແລະ ຂໍ້ດີກໍຕ້ອງເອົາມາເວົ້າຄືກັນ, ດ້ານໜຶ່ງແມ່ນເພື່ອຊ່ວຍກັນແກ້ໄຂ ແລະ ອີກດ້ານໜຶ່ງແມ່ນຊັກຊວນກັນເອົາແບບຢ່າງຂອງກັນ. ພະນັກງານແຕ່ລະຄົນ, ສະມາຊິກພັກເຮົາແຕ່ລະຄົນ ແຕ່ລະມື້ຕ້ອງສັງເກດເບິ່ງຕົນເອງ ຕຳໜິຕົນເອງ ແລະ ແກ້ໄຂດັດແປງຕົນເອງ ຄືກັນກັບພວກເຮົາເຄີຍລ້າງໜ້າທຸກໆມື້, ເຮັດໄດ້ດັ່ງນັ້ນ ໃນພັກຈຶ່ງຈະບໍ່ມີພະຍາດ ແລະ ພັກຈຶ່ງຈະແຂງແຮງທີ່ສຸດ.

ອ່ານຕໍ່ສະບັບໜ້າ...




# ວິທີຄິດ ນຳມາເຊິ່ງຄວາມສຳເລັດ

\# ດົ້ນກົບເມກ

ບາງຄົນເກີດມາຈົນແລ້ວຮູ້ສຶກທໍ້ຖອຍ, ຮູ້ສຶກວ່າຕົນເອງຂາດທີ່ເພິ່ງ... ແຕ່ບາງຄົນທີ່ສຳເລັດ ຈະຄິດຕ່າງກັນ ເພາະເຂົາຈະຄິດສ້າງຄວາມເຂັ້ມແຂງໃຫ້ຕົນເອງ ແລ້ວຄ່ອຍລົງມືປະຕິບັດນັບຈາກວຽກນ້ອຍໄປຫາວຽກໃຫຍ່, ບາງຄົນຮຽນພຽງເພື່ອເອົາໃບປະກາດໄປສະໝັກວຽກ ແຕ່ບາງຄົນຕັ້ງໃຈຮຽນໃຫ້ເກີດຄວາມຮູ້ແທ້ຈິງ ເພື່ອໄປເຮັດທຸລະກິດ ຫຼື ສ້າງຕົວເອງດ້ວຍຄວາມຮູ້ມີສິດລົ້ມເຫຼວ ດ້ວຍເຫດນັ້ນຄົນທີ່ເຂົາສຳເລັດ ເຂົາຈະມີວິທີຄິດໄຕ່ຕອງຫາເຫດຜົນ, ຊັ່ງຊາຜົນໄດ້ຜົນເສຍ ໂດຍໃຊ້ຄວາມພະຍາຍາມ ແລະ ຄວາມອົດທົນເປັນເຄື່ອງມືກ້າວໄປສູ່ເປົ້າໝາຍ, ມີຫຼາຍຄຸນສົມບັດຂອງຄົນສຳເລັດຄື: ເຂົາຈະຄິດຫາວິທີປັບປຸງພັດທະນາຕົນເອງຕະຫຼອດເວລາ ແຕ່ຄົນລົ້ມເຫຼວມັກບໍ່ປ່ຽນແປງຕົວເອງ ຮັກສາຮູບແບບເດີມເອົາໄວ້ ກໍຈະໄດ້ຮັບຜົນເກົ່າໆ ເພາະມີວິທີດຽວ.

ຖ້າເຮົາສັງເກດຊີວິດລັບຜູ້ລົ້ມເຫຼວ ຫຼື ຜູ້ບໍ່ພັດທະນາ ກໍຈະຢືມເງິນສ້າງໜີ້ເພີ່ມພຽງແຕ່ເອົາມາໃຊ້ຈ່າຍບໍລິໂພກໃຫ້ຮູ້ສຶກວ່າຕົວເອງຢູ່ດີກິນດີມີຖານະໂກ້ຫຼູໄປແຕ່ລະມື້ ຜູ້ຂຽນພຽງແຕ່ຍົກຕົວຢ່າງຂ້າງເທິງນັ້ນກໍຄົງເປັນທີ່ເຂົ້າໃຈໄດ້ວ່າ: ວິທີຄິດຂອງຄົນເຮົາຈະສຳເລັດ ຫຼື ລົ້ມເຫຼວມັນຕ່າງກັນ.

ສັງລວມໄດ້ວ່າ: ການທີ່ຈະປະສົບຜົນສຳເລັດ ມັນອາດບໍ່ຂຶ້ນກັບປະລິມານຄວາມຮູ້-ໃບປະລິນຍາສູງໆຢ່າງດຽວ




ຄວາມສາມາດ ດັ່ງນັ້ນ, ວິທີຄິດຂອງຄົນເຮົາຈຶ່ງສຳຄັນຕັດສິນອະນາຄົດໄດ້.

ທ່ານຜູ້ອ່ານອາດມີວິທີຄິດແຕກຕ່າງກັນ ແຕ່ຄົນທີ່ປະສົບຜົນສຳເລັດ ເຂົາມີລັກສະນະຄິດບວກ; ເບິ່ງເຫັນຜົນດີຜົນເສຍ ຖ້າຕັດສິນໃຈພາດກໍຄົນໃນເລື່ອງການສ້າງອະນາຄົດ ບາງຄົນສ້າງໜີ້ (ຢືມເງິນ) ດ້ວຍເຫດຜົນຕ່າງກັນ ຜົນທີ່ໄດ້ຮັບຈຶ່ງອອກມາຕ່າງກັນ; ຄົນສຳເລັດຈະຢືມເງິນມາຕໍ່ຍອດລາຍໄດ້ສ້າງທຸລະກິດ; ລົງທຶນສ້າງຄວາມເຂັ້ມແຂງໝັ້ນຄົງໃຫ້ຊີວິດກ້າວໜ້າ ແຕ່ສຳແຕ່ປັດໄຈສຳຄັນກວ່ານັ້ນຄືວິທີຄິດ-ຮູ້ຈັກຄິດຢ່າງສະຫຼາດ, ຂະບວນການສຶກສາ-ຮຽນຮູ້ທີ່ດີ ບໍ່ແມ່ນສອນ ຫຼື ຮຽນໃຫ້ໄດ້ຄວາມຮູ້ຢ່າງດຽວ ແຕ່ສອນໃຫ້ຄິດເປັນ ຮູ້ຈັກເອົາຄວາມຮູ້ມາຄິດຕໍ່ຍອດ ຈຶ່ງເອີ້ນວ່າເປັນຜູ້ມີປັນຍາ!




## ວຸລະ

ວຸລະ: ແປວ່ານ້ອຍ, ຄຳນີ້ ມັກໃຊ້ນຳໜ້າຄຳສະໝາດ ເຊັ່ນ ວຸນລະວັກ, ວຸນລະສັກກະຫລາດ, ວຸນລະກະກິນ ແລະ ອື່ນໆ.

ໃນຄຳວ່າ ວຸນລະສັກກະຫລາດນັ້ນ ແມ່ນສັກກະຫຼາດນ້ອຍ ຄືສັກກະຫລາດທີ່ຕັ້ງຂຶ້ນລຸນຫຼັງພຸດທະສັກກະຫລາດ 1.181ປີ. ວຸນລະສັກກະຫຼາດນີ້ ຕັດອອກຈາກຈຳນວນອາຍຸ ປີ ແຫ່ງກາລີຍຸກ, ໃນເມື່ອອາຍຸກາລີຍຸກລ່ວງໄດ້ 3.739 ປີໂດຍແມ່ນພະສັງກະລາດ ຂອງປະເທດພູກາມ (ພະມ້າ) ເປັນຜູ້ຕັ້ງຂຶ້ນ ເພີ່ນໃຊ້ສຳລັບຄຳນວນເລກຫາໂຫລະສາດ ສ່ວນຄຳວ່າ ວຸນລະວັກ ແມ່ນພະຄຳພີໜຶ່ງທີ່ນອນຢູ່ໃນໝວດ ພະວິໄນ. ສຳລັບ ວຸນລະກະກິນ ແມ່ນກະກິນຂະໜາດນ້ອຍ ທີ່ເຮັດໃຫ້ແລ້ວໃນມື້ໜຶ່ງວັນດຽວ ຫຼືເອີ້ນວ່າ ກະກິນແລ່ນກໍໄດ້. ຍັງມີຄຳວ່າ ວຸນລະສານ ແມ່ນສິ່ງພິມທີ່ບອກເລື່ອງຕ່າງໆ ອັນໜ້າສົນໃຈ ເຊິ່ງພິມອອກມາເປັນໄລຍະ ໄລຍະ ໂດຍກຳໄດ້ກຳນົດເວລາແນ່ນອນ. ຍັງມີຄຳວ່າ ວຸນລະພາກ ແປວ່າພາກນ້ອຍ, ວຸນລະພາກນີ້ ຈະນອນຢູ່ໃນ ມະຫາພາກ ແລະ ຍັງເປັນເຄື່ອງໝາຍວຸດສຳລັບຂັ້ນວັກ. ຍັງມີຄຳວ່າ ວຸນລະພົນ ແມ່ນປາໄມ້ນ້ອຍ ແລະ ຍັງເປັນຊື່ກັນທີ, ຂອງພະເທວດ ຫຼື ກັນເທດພະເທວດ ທີ່ພັນລະນາເຖິງປາໄມ້ນ້ອຍ ເມື່ອພະເທວດເດີນດົງ ຢູ່ໃນກັນເທດນັ້ນ ຍັງມີມະຫາພົນ ເຊິ່ງພັນລະນາເຖິງປາໄມ້ໃຫຍ່ ເມື່ອພະເທວດເດີນດົງ.

ວຸນລະ ເປັນພາສາບາລີ, ພາສາຂອງຄົນອິນເດຍບູຮານ.

# ບົດບາດແມ່ຍິງໃນການພັດທະນາ

\# ໂດຍ: ຜູ້ອື່ນ

ບົດບາດຂອງແມ່ຍິງໃນການພັດທະນາ ກ່ຽວພັນໂດຍກົງກັບເປົ້າໝາຍຂອງການພັດທະນາເສດຖະກິດ ແລະ ສັງຄົມຢ່າງກວ້າງຂວາງ ແລະ ເປັນພື້ນຖານ ເພື່ອພັດທະນາທຸກໆສັງຄົມ; ການພັດທະນາໝາຍເຖິງການພັດທະນາທັງໝົດ ລວມທັງການພັດທະນາທາງດ້ານການເມືອງ, ເສດຖະກິດ ແລະ ດ້ານອື່ນໆຂອງຊີວິດມະນຸດ ຄວນມີການຊຸກນຳໃຫ້ຈັດຫາວິທີການຕ່າງໆເພື່ອໃຫ້ແມ່ຍິງ ໂດຍສະເພາະແມ່ຍິງທີ່ຍາກຈົນ ຫຼື ຂາດແຄນ ມີຄວາມສາມາດຮຽກຮ້ອງ, ໄດ້ຮັບຜົນສຳເລັດ, ນຳໃຊ້ ແລະ ອ້າງສິດທິກ່ຽວກັບຄວາມສະເໝີພາບໃນການກຳໂອກາດດ້ານຕ່າງໆໃຫ້ຫຼາຍຂຶ້ນເລື້ອຍໆ ເວົ້າລວມແລ້ວ ຍິ່ງມີແມ່ຍິງທີ່ສາມາດເຂົ້າຮ່ວມໃນກິດຈະການຂອງສັງຄົມໄດ້ ໃນຖານະເປັນຕົວແທນ ເອກະລາດທາງດ້ານກົດໝາຍ ຍິ່ງຈະເປັນການປະກອບສ່ວນໃຫ້ຄວາມຮັບຮູ້ກ່ຽວກັບສິດສະເໝີພາບຂອງແມ່ຍິງໃນສັງຄົມໄດ້ຮັບການປະຕິບັດໃນພາກຕົວຈິງເປັນຂັ້ນໆໄປ. ການພັດທະນາຕ້ອງມີມິຕິທາງສິນລະທຳປະກອບພ້ອມ ເພື່ອຮັບປະກັນວ່າ ມີຄວາມຍຸຕິທຳຢ່າງແທ້ຈິງ,ຕອບສະໜອງຕໍ່ຄວາມຕ້ອງການ, ສິດທິຂອງບຸກຄົນ ຄວນນຳເອົາວິທະຍາສາດ ແລະ ເຕັກໂນໂລຊີມາໝູນໃຊ້ພາຍໃນຂອບເຂດເສດຖະກິດ ແລະ ສັງຄົມທີ່ຮັບປະກັນໄດ້ວ່າສິ່ງແວດລ້ອມຈະມີຄວາມປອດໄພສຳລັບທຸກຮູບແບບ ການດຳລົງຊີວິດທີ່ມີຢູ່ໃນໂລກຂອງພວກເຮົາ.

ການສົ່ງເສີມສິດຂອງແມ່ຍິງ ຈະສາມາດດຳເນີນໄດ້ຢ່າງເຕັມສ່ວນ ແລະ ມີປະສິດທິພາບ ໃນພາວະທີ່ມີສັນຕິພາບ ແລະ ຄວາມໝັ້ນຄົງສາກົນ ເຊິ່ງໃນນັ້ນ ສາຍພົວພັນລະຫວ່າງປະເທດຕ່າງໆ ຈະສະແດງອອກບົນພື້ນຖານ ການເຄົາລົບສິດທິຕາມກົດໝາຍຂອງທຸກປະເທດ ບໍ່ວ່າຈະເປັນປະເທດນ້ອຍ ຫຼື ໃຫຍ່ ແລະ ບໍ່ວ່າເຊື້ອຊາດໃດ ທີ່ມີການປະຕິບັດສິດໃນການກຳນົດໂຊກຊາຕາຂອງຕົນເອງ ກໍຄືເອກະລາດ ອະທິປະໄຕ ຜືນແຜ່ນດິນອັນຄົບຖ້ວນ ແລະ ສິດທິໃນການມີຊີວິດຢູ່ໃນສັນຕິພາບພາຍໃນເຂດແດນແຫ່ງຊາດຂອງຕົນ.

ການໃຫ້ແມ່ຍິງປະກອບສ່ວນເຂົ້າໃນການພັດທະນາ ແລະ ເສີມສ້າງສັນຕິພາບ ກໍຄືການສົ່ງເສີມໃຫ້ແມ່ຍິງມີຄວາມສະເໝີພາບກັບເພດຊາຍນັ້ນ ຕ້ອງນຳໃຊ້ຍຸດທະສາດ ແລະ ມາດຕະການຕ່າງໆທີ່ກ່ຽວພັນເຖິງຫຼາຍດ້ານ ເປັນທິດທາງໃຫ້ປະຊາຊົນປະຕິບັດ; ຍຸດທະສາດເຫຼົ່ານີ້ ຕ້ອງອີງໃສ່ການພັດທະນາ ແລະ ການນຳໃຊ້ຊັບພະຍາກອນມະນຸດໃຫ້ນັບມື້ສູງຂຶ້ນສູ່ລະດັບສູງ ໂດຍແນ່ໃສ່ສົ່ງເສີມຄວາມສະເໝີພາບ ແລະ ການພັດທະນາສັງຄົມ ແລະ ກຸ່ມຄົນຕ່າງໆຢ່າງຕໍ່ເນື່ອງ.

ຄັດຈາກ: ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງປີ1998.



## ຂຽນຄຳລາວໃຫ້ຖືກ

\#ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ສະມັດຖະພາບ | ສະມັດຕະພາບ |
| ຊັບພະຍາກອນ | ສັບພະຍາກອນ |
| ຍຸດຕິ | ຍຸຕິ |
| ປະສິດທິພາບ | ປະສິດຕິພາບ |
| ປະລະມາຈານ | ປະລາມາຈານ |
| ປະລະມານູ | ປະລາມະນູ |
| ລັດຖະບານ | ລັດທະບານ |
| ວັດທະນະທຳ | ວັດທະນາທຳ |

# ອາການໝົດໄຟໃນການເຮັດວຽກ

**ແປ ແລະ ຮຽບຮຽງໂດຍ: ສາວເໜືອ**



## ສຸກສະບາຍຫາຍໂຣຄາ



ການທີ່ຕ້ອງຕື່ນແຕ່ເຊົ້າອອກໄປເຮັດວຽກທຸກມື້ ແລະ ຕ້ອງພົບກັບບັນຫາຕ່າງໆ ທັງບັນຫາການຈະລາຈອນທີ່ແອອັດ, ວຽກງານທີ່ໜັກໜາ, ບັນຫາຕ່າງໆໃນການເຮັດວຽກ ແລະ ຍັງຕ້ອງຮັບມືກັບເພື່ອນຮ່ວມງານທີ່ມີຫຼາຍປະເພດ ເຊິ່ງປັດໃຈເຫຼົ່ານີ້ ອາດຈະນຳໄປສູ່ອາການ "ໝົດໄຟໃນການເຮັດວຽກ" ໄດ້ ແລະ ໃນສະບັບນີ້, ເຮົາມາສຶກສານຳກັນເບິ່ງວ່າ ຕົນເອງມີອາການໝົດໄຟໃນການເຮັດວຽກ ຫຼື ບໍ່.

ຖ້າອາການໝົດໄຟນີ້ຫາກເກີດຂຶ້ນກັບບຸກຄົນໃດ ກໍຈະເຮັດໃຫ້ຄວາມສຸກໃນການເຮັດວຽກຂອງບຸກຄົນນັ້ນຫຼຸດໜ້ອຍຖອຍລົງ ເກີດຄວາມຜິດພາດໃນການປະຕິບັດໜ້າທີ່ວຽກງານ ແລະ ຜົນສຸດທ້າຍຄື ສິ່ງຜົນເສຍຕໍ່ອົງກອນ ກໍຄືເຮັດໃຫ້ໂອກາດການລາອອກເພີ່ມຫຼາຍຂຶ້ນ ແລະ ຄວາມສຳເລັດຂອງອົງການນັ້ນກໍຫຼຸດລົງເຊັ່ນດຽວກັນ; ອາການໝົດໄຟໃນການເຮັດວຽກ ເກີດຂຶ້ນຈາກຄວາມເມື່ອຍລ້າ, ຕຶງຄຽດຈາກການເຮັດວຽກ ເຊິ່ງອາດຈະພາໃຫ້ເກີດອາການຕ່າງໆເຫຼົ່ານີ້:

- ເມື່ອຍລ້າ (Emotiona exhaustion) ຮູ້ສຶກວ່າ ຕ້ອງແບກຮັບຄວາມກົດດັນທາງອາລົມຫຼາຍເກີນໄປ ແລະ ຮູ້ສຶກໝົດພະລັງງານໃນການເຮັດວຽກ;

-ຄວາມເປັນສ່ວນຕົວ(Depersonaliztion) ມີທັດສະນະຄະຕິດ້ານລົບຕໍ່ກັບວຽກງານ ບໍ່ໃສ່ໃຈ, ລະເລີຍ ຫຼື ບໍ່ເອົາໃຈໃສ່ ແລະ ແຍກຕົວອອກຈາກໝູ່;

- ບໍ່ກະຕືລືລົ້ນຕໍ່ຄວາມສຳເລັດຂອງຕົນ (Diminished sense of personal accomplishment) ຮູ້ສຶກວ່າຕົນບໍ່ມີຄວາມສາມາດ, ບໍ່ມີປະສິດທິພາບໃນການເຮັດວຽກ ແລະ ບໍ່ສາມາດທີ່ຈະຊ່ວຍເຫຼືອຜູ້ອື່ນໄດ້.

ອາການໝົດໄຟໃນການເຮັດວຽກ ສາມາດເກີດຂຶ້ນໄດ້ກັບທຸກຄົນ ແຕ່ເມື່ອຮູ້ສຶກວ່າເກີດຂຶ້ນກັບຕົນເອງແລ້ວ ໃຫ້ຕັ້ງສະຕິກຽມພ້ອມທັງຮ່າງກາຍ ແລະ ຈິດໃຈ ໃນແຕ່ລະມື້ຂອງການເຮັດວຽກ, ທົບທວນຕົນເອງວ່າ ຕົນເອງໝົດໄຟໃນການເຮັດວຽກ ຫຼືບໍ່ ຖ້າມີຄວນຫາເວລາພັກຜ່ອນ ໃຫ້ຄຸນຄ່າໃນໂຕເອງ, ເຮັດວຽກເປັນທີມ ແບ່ງປັນຄວາມຄິດ ໂດຍເຝິກການໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າຊ່ວຍໃນການເຮັດວຽກ ເພື່ອຄວາມສະດວກ ແລະ ວ່ອງໄວ ແລະ ຈະເປັນການດີທີ່ສຸດ ຖ້າເຮົາມີຄົນທີ່ໄວ້ໃຈຄອຍໃຫ້ຄຳປຶກສາ ແລະ ເພິ່ງພາທາງຈິດໃຈ ເຊິ່ງບໍ່ໄດ້ໝາຍຄວາມວ່າ ຕ້ອງເປັນຄົນຮັກເທົ່ານັ້ນ ຫາກແຕ່ເປັນຄົນໃນຄອບຄົວນຳ, ໝູ່ເພື່ອນ ກໍຄືເພື່ອນຮ່ວມງານ.

www.thairath.co.th




## ອວຍພອນພັກ

**# ໂດຍ: ຫຼານເຈົ້ານ້ອຍ**

ເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 68 ປີ
(22/3/1955-22/3/2023)

| | |
|---|---|
| ❊ ດວງເດືອນດູເດັ່ນຟ້າ | ນະພາຮຸ່ງເຮືອງໃສ |
| ມີໝູ່ດາວດາລາ | ແວດວົງໂຮມຫຸ້ມ |
| ປຸ້ມລຸມກັນເຍືອງຟ້າ | ເວຫາງາມສະຫງ່າ |
| ປະຈັກຕາເດັ່ນແຈ້ງ | ແຍງແລ້ວເບື່ອບໍ່ເປັນ |
| | |
| ❊ ຍາມໃດຟ້າມືດຄຶ້ມ | ມອນເມກມາບັງ |
| ມອງບໍ່ເຫັນເດືອນດາວ | ສ່ອງແສງບົນຟ້າ |
| ຫາກເຮົາບິນເໜືອເຝື້ອ | ເດືອນດາວຍັງດູເດັ່ນ |
| ຊ່ວຍກັນສາດສ່ອງໃຫ້ | ເມືອງຟ້າສະຫງ່າງາມ ທ່ານເອີຍ! |
| | |
| ❊ ພັກນັ້ນປຸນປຽບໄດ້ | ເດືອນເດັ່ນບົນນະພາ |
| ດາລາຄືປະຊາຊົນ | ຮ່ວມໂຮມຮຸມຫຸ້ມ |
| ປຸ້ມລຸມກັນເສີມສ້າງ | ເມືອງລາວໃຫ້ໃສສ່ອງ |
| ແຈ້ງດັ່ງດວງນ່ານຟ້າ | ຈະເລີນເຫຼື້ອມເຮື່ອເຮືອງ |
| | |
| ❊ ເຖິງແມ່ນຕົກບ່ອນບັ້ນ | ມືວມືດສູນແສງ |
| ພັກກັບປະຊາກໍຍັງ | ຮ່ວມແຮງແຂງສູ້ |
| ພັກນຳພາຊູຊ້ວນ | ຊາວປະຊາຕາມໄຕ່ |
| ຊ່ວຍເຍືອງແຍງສ່ອງໃຫ້ | ເມືອງບ້ານເດັ່ນງາມ |
| | |
| ❊ ວັນນີ້ຄ້າຍວັນເກີດເຈົ້າ | ຄົບ 68 ພັນສາ |
| ປະຊາຊົນລາວເຮົາ | ຮ່ວມອວຍພອນໃຫ້ |
| ຜູ້ນຳພັກລັດຈິ່ງໄດ້ | ຍືນຍົງທະນົງແກ່ນ |
| ເປັນແສງເດືອນສ່ອງໃຫ້ | ປະຊາເຊື້ອໄດ້ໄຕ່ຕາມ ຊອບແລ້ວ! |
| | |
| ❊ ຂໍໃຫ້ພັກຈິ່ງໄດ້ | ຊີ້ສ່ອງແນວທາງ |
| ນຳພາ ສປປ ລາວ | ສູ່ຄວາມຈະເລີນກ້າວ |
| ນຳປະເທດຊາດໄດ້ | ຈະເລີນງາມນາມຮຸ່ງ |
| ພຸ່ງປະກາຍເດັ່ນພົ້ນ | ລາວກ້າວພັດທະນາ ນັ້ນທ້ອນ! |



## ຫົກຫາຍ ລະບາຍ

**(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)**

**# ສາວຈົ້ມ**

❊ **8 ມີນາຜ່ານພົ້ນ** ຫລາຍຄົນຫ່ຽວສຸກສັນ ວັນແມ່ຍິງສາກົນ ທົ່ວທົບທ່າທ້ອງ ສະຫຼອງກິດຈະກຳອ້າງ ວັນບາງບານແມ່ ໂລກາທອບຮັບຮູ້ ສະຫຼອງຫຼິ້ນຄຶກຄະນອງ ເປັນແນວໃດພີ່ນ້ອງ ບານແມ່ທັງຫລາຍ ມີທ່ານຊາຍເອົາໃຈ ຫຼື**ຍື່ນຂອງຂັວນ**ຕ້ອນ **ບໍ່!** ຂໍໃຫ້ຍິງທັງລ້າ ໃນໂລກາສຸກສະຫງ່າ ຊົມຫວັງທັງລາບລື້ນ ຍືນໝັ້ນຊ່ອນບີລັບ **ເດາະເນີ!**

❊ **ທີ 22 ມີນາ** ຫຍັບຈໍ່ຈອບເຖິງ **68 ປີ**ວຽນມາ ລະນຶກຫາບຸນຄຸນຮູ້ ພັກຜູ້ນຳພາສ້າງ ເຍືອງທາງໃຫ້ເດີນໄຕ່ ສີວິໄລພຸ່ງພົ້ນ ເລິງເລື້ອຍຕະຫຼອດມາ **ໂອກາດນີ້!** ຂໍໃຫ້ພັກຜູ້ກ້າ ປະຊາພ່າດຽວກັນ ສຸກກະເສມສຳລານ ທົ່ວທານີແຄວ້ນ ທຸກແຫ່ງແດນທ່າທ້ອງ ເມືອງລາວເຊິ່ງຊ່າ ຂໍໃຫ້ພັກ ມີອາຍຸ-ວັນນະ-ສຸຂະພາບພຽບພ້ອມ ຢືນຄຽງຂ້າງຄູ່ປະຊາ **ທ່ານເອີຍ!**

## ຊອບຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ເລືອກຜິດ**

ສາວຈ່ອຍເປັນຄົນບໍ່ມີຫູມາແຕ່ນ້ອຍ ພໍເລີ່ມໃຫຍ່ເປັນສາວ ລາວກະເລີ່ມອາຍ ຈຶ່ງໄປຫາທ່ານໝໍເພື່ອສັນຍະກຳ, ໝໍກໍເລີຍເອົາຫູຫລາຍແບບມາໃຫ້ເລືອກ ຈາກນັ້ນກໍຜ່າຕັດຫຍິບໃຫ້ ພາຍຫຼັງດີຮຽບຮ້ອຍກໍໄປພົບທ່ານໝໍເພື່ອລາຍງານຜົນ.

**ໝໍ:** ເປັນຈັ່ງໃດ ຍິນສຽງແຈ້ງດີບໍ່

**ສາວຈ່ອຍ:** ແຈ້ງ ແຕ່ບໍ່ຮູ້ເລື້ອງ

**ໝໍ:** ໂອຍ! ຊົມພໍດອກ ເຈົ້າຟັງຫຍັງບໍ່ຄ່ອຍຮູ້ເລື້ອງ ຂອງແນວວ່າເຈົ້າເລືອກເອົາຫູຜູ້ຊາຍ ຂອຍກະລືມສັງເກດ

**ສາວຈ່ອຍ:** ???



## ຄະຕິເຕືອນໃຈ

**#ດອກຂະຍອມ**

| | |
|---|---|
| ຢູ່ກັບວຽກ | ໃຫ້ໃຊ້ປັນຍາ |
| ຢູ່ກັບບັນຫາ | ໃຫ້ລົງມືແກ້ |
| ຢູ່ກັບພໍ່ແມ່ | ໃຫ້ຮູ້ຈັກກະຕັນຍູ |
| ຢູ່ກັບໝູ່ຄູ່ | ໃຫ້ຊື່ສັດຈິງໃຈ |
| ຢູ່ກັບຜູ້ໃຫຍ່ | ໃຫ້ອ່ອນນ້ອມຖ່ອມຕົນ |
| ຢູ່ກັບສັງຄົມ | ໃຫ້ຮູ້ສາມັກຄີ |
| ຢູ່ກັບຄົນດີ | ໃຫ້ເອົາເປັນແບບຢ່າງ |




## ຫວ່າງ – ວ່າງ

"ວ່າງນີ້, ຂ້ອຍບໍ່ມີເວລາຫວ່າງເລີຍ ຕ້ອງໄປບ້ານສະວ່າງຕະຫຼອດ". ນັກຂຽນມືໃໝ່ກົດປຸ່ມຕົວອັກສອນລົງໃສ່ໃນໜ້າເຟສຂອງຕົນ ເພື່ອໃຫ້ເພື່ອນນັກອ່ານໄດ້ອ່ານບົດເລື່ອງສັ້ນທີ່ຫາກໍປັ້ນແຕ່ງອອກມາ ແຕ່ບໍ່ສະເດືອກໃຈວ່າການສະກົດຄຳຂອງຕົນຖືກຕ້ອງຕາມຄວາມໝາຍຂອງແຕ່ລະສັບຫຼືບໍ່.

ປະໂຫຍກໃນວົງຢືມຂ້າງເທິງນີ້, ຖ້າເປັນພາສາທີ່ເປັ່ງສຽງອອກມາຈາກປາກ ກໍຈະບໍ່ມີບັນຫາຫຍັງ ຜູ້ຟັງສາມາດເຂົ້າໃຈໄດ້ຢ່າງແຈ່ມແຈ້ງດີ. ແຕ່ຖ້າຂຽນເປັນຕົວອັກສອນແລ້ວ ກໍຈະມີບັນຫາໃນເລື່ອງການສະກົດຄຳຜິດ ເພາະໃນການຂຽນຕົວອັກສອນສູງ ແລະ ອັກສອນຕ່ຳມີໄມ້ເອກ x່ ນີ້, ພວກເຮົາເຈົ້າຂ້ອຍສ່ວນຫຼາຍມັກຈະອອກສຽງຄືກັນ.

"ຫວ່າງ ແລະ ວ່າງ", ຖ້າໃຫ້ທວາຍບອກຄວາມໝາຍໂດຍເວົ້າເປັນຄຳໂດດໆ ກໍມັກຈະທວາຍບໍ່ຖືກ. ແຕ່ຖ້າສອງຄຳນີ້ຢູ່ໃນປະໂຫຍກ ກໍຈະສາມາດບອກເຖິງຄວາມໝາຍໄດ້ຢ່າງຊັດເຈນ.

ຜ່ານມາ ປາກົດເຫັນມີຜູ້ສະກົດ "ວ່າງ" ເປັນ "ຫວ່າງ" ຫຼືປີ້ນກັນສະກົດ "ຫວ່າງ" ເປັນ "ວ່າງ". ເພື່ອໃຫ້ພວກເຮົາສະກົດຄຳທັງສອງນີ້ຖືກຕ້ອງຕາມຄວາມໝາຍຂອງມັນ, ຜູ້ຂຽນຂໍອະທິບາຍທັງສອງສັບຄືດັ່ງນີ້:

"ຫວ່າງ" ເປັນຄຳນາມ ມີຄວາມໝາຍວ່າ:

(1) ຍາມ, ເວລາ, ເທື່ອ ເຊັ່ນ

- ຂ້ອຍພົບລາວຢູ່ຫຼວງພະບາງຫວ່າງເດືອນກ່ອນ.
- ຫວ່າງນີ້, ອາຈານຄາວຽກຫຼາຍ.
- ພວກເຮົາຕ້ອງຫາເວລາໄປຢາມລາວຈັກຫວ່າງ.

(2) ບ່ອນເປົ່າຢູ່ກາງໄລຍະແຕ່ບ່ອນໜຶ່ງຫາບ່ອນໜຶ່ງ ເຊັ່ນ

- ເຕະບານລອດຫວ່າງຂາ.

ນອກຈາກນັ້ນ ຍັງມີຄຳສອງພະຍາງທີ່ພະຍາງຫຼັງສະກົດເປັນ "ຫວ່າງ" ຄື "ລະຫວ່າງ" ແລະ "ສະຫວ່າງ".

"ວ່າງ" ເປັນຄຳຄຸນນາມ ມີຄວາມໝາຍວ່າ:

(1) ບໍ່ມີຫຍັງ, ເປົ່າ (ບາງເທື່ອມັກໃຊ້ຕິດກັນວ່າ ເປົ່າວ່າງ ຫຼື ວ່າງເປົ່າ) ເຊັ່ນຕົວຢ່າງ:

- ໂຕະນີ້ບໍ່ວ່າງ ແຕ່ຫົວໃຈນ້ອງຍັງວ່າງ.
- ບັນຫານີ້ມີຊ່ອງວ່າງຫຼາຍ.
- ຫ້ອງເຊົ່ານີ້ຍັງວ່າງ.

(2) ບໍ່ມີພາລະຜູກພັນ ເຊັ່ນ

- ເວລາວ່າງວຽກ ຂ້ອຍມັກຂຽນກອນສົ່ງໃຫ້ຜູ້ສາວອ່ານ.
- ສ່ວນລາວບໍ່ເຄີຍວ່າງວຽກຈັກເທື່ອ, ມີແນວເຮັດຢູ່ຕະຫຼອດ ຈຶ່ງບໍ່ມີເວລາລົມຜູ້ສາວ.

ເພື່ອບໍ່ໃຫ້ຂຽນຜິດ ພຽງແຕ່ຈື່ງ່າຍໆວ່າ "ຫວ່າງ" ແມ່ນຄຳນາມທີ່ໝາຍເຖິງ "ຍາມ, ເວລາ" ແລະ "ບ່ອນເປົ່າຢູ່ກາງ". ສ່ວນ "ວ່າງ" ນັ້ນ ເປັນຄຳຄຸນນາມທີ່ໝາຍເຖິງ "ເປົ່າ, ບໍ່ມີຫຍັງ". ດັ່ງນັ້ນ, ພວກເຮົາຄວນໃສ່ໃຈ:

- ຢ່າໄດ້ຂຽນ "ມີຫ້ອງວ່າງໃຫ້ເຊົ່າ" ເປັນ "ມີຫ້ອງຫວ່າງໃຫ້ເຊົ່າ".
- ຢ່າໄດ້ຂຽນ "ຫວ່າງນີ້, ຂ້ອຍຄາວຽກຫຼາຍ" ເປັນ "ວ່າງນີ້, ຂ້ອຍຄາວຽກຫຼາຍ".

ສ່ວນປະໂຫຍກຂ້າງຕົ້ນຂອງບົດນີ້ ກໍຕ້ອງຂຽນໃຫ້ຖືກຄືແນວນີ້: "ຫວ່າງນີ້, ຂ້ອຍບໍ່ມີເວລາວ່າງເລີຍ ຕ້ອງໄປບ້ານສະຫວ່າງຢູ່ຕະຫຼອດ".



## ກຳປູເຈຍ ສ້າງເຂດສະຫງວນປາຂ່າແມ່ນ້ຳຂອງທີ່ໃກ້ຈະສູນພັນ



ໃນວັນທີ 27 ກຸມພາ ຜ່ານມາ ມີການລາຍງານວ່າ: ລັດຖະບານກຳປູເຈຍ ໄດ້ອອກດຳລັດສະບັບໜຶ່ງ ເພື່ອສ້າງເຂດສະຫງວນປາຂ່າອາເຢຍາວາດີທີ່ສ່ຽງໃກ້ຈະສູນພັນ ໂດຍຖືເອົາລຳແມ່ນ້ຳຂອງ ທາງພາກຕາເວັນອອກສຽງເໜືອຂອງກຳປູເຈຍເປັນຕົ້ນຕໍ.

ທ່ານ ຮຸນ ເຊັນ ນາຍົກລັດຖະມົນຕີກຳປູເຈຍ ໄດ້ລົງນາມໃນດຳລັດສະບັບນີ້ ໂດຍໄດ້ປົກຄຸມລຳແມ່ນ້ຳຂອງທີ່ຍາວ 120 ກິໂລແມັດ ຢູ່ແຂວງຊຽງແຕງ ແລະ ແຂວງກຣໍແຈະ ປະເທດກຳປູເຈຍ. ເນື້ອໃນດຳລັດໄດ້ຫ້າມບໍ່ໃຫ້ທຳການປະມົງໃນເຂດສະຫງວນປາຂ່າ ແລະ ກຳນົດໃຫ້ຄວາມໄວຂອງເຮືອທີ່ແລ່ນຜ່ານຢູ່ບໍລິເວນນັ້ນບໍ່ໃຫ້ກາຍ 30 ກິໂລແມັດຕໍ່ຊົ່ວໂມງ ພ້ອມທັງຫ້າມລ້ຽງສັດນ້ຳໃນເຂດສະຫງວນ.

ອີງຕາມຕົວເລກຂອງອົງການປົກຄອງແຂວງກຣໍແຈະ ສະແດງໃຫ້ເຫັນວ່າ, ຈຳນວນປາຂ່າອາເຢຍາວາດີໃນລຳແມ່ນ້ຳຂອງພາຍໃນປະເທດກຳປູເຈຍມີປະມານ 80 ໂຕ, ແຕ່ໃນເດືອນທັນວາປີຜ່ານມາ, ມີປາຂ່າໃຫຍ່ 3 ໂຕໄດ້ຕາຍຍ້ອນເບັດຕຶກປາ.

## ກອງປະຊຸມຄົບຄະນະເທື່ອທີ 2 ກອງປະຊຸມຄັ້ງທີ 1 ຂອງສະພາປະຊາຊົນແຫ່ງຊາດຈີນ ຊຸດທີ 14




ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນວັນທີ 7 ມີນາ 2023 ກອງປະຊຸມຄົບຄະນະເທື່ອທີ 2 ກອງປະຊຸມຄັ້ງທີ 1 ຂອງສະພາປະຊາຊົນແຫ່ງຊາດຈີນ ຊຸດທີ XIV ໄດ້ຈັດຂຶ້ນຢູ່ຫໍສະພາປະຊາຊົນທີ່ນະຄອນຫຼວງປັກກິ່ງ ໂດຍໄດ້ຮັບຟັງ ແລະ ພິຈາລະນາບົດລາຍງານວຽກງານຂອງຄະນະປະຈຳສະພາປະຊາຊົນແຫ່ງຊາດຈີນ, ບົດລາຍງານວຽກງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ, ພ້ອມນັ້ນ, ຍັງໄດ້ຮັບຟັງການອະທິບາຍກ່ຽວກັບແຜນການປະຕິຮູບກົງຈັກຄະນະລັດຖະບານຈີນໂດຍມີທ່ານ ສີ ຈິ້ນ ຜິງ ເລຂາທິການໃຫຍ່ຄະນະກຳມະການສູນກາງພັກຄອມມູນິດຈີນ, ປະທານປະເທດຈີນ ພ້ອມດ້ວຍຜູ້ນຳພັກ ແລະ ລັດທ່ານອື່ນໆເຂົ້າຮ່ວມ.

ໂດຍໄດ້ຮັບການມອບໝາຍຈາກຄະນະລັດຖະບານຈີນ, ທ່ານ ຊ່ຽວ ເຈ ທີ່ປຶກສາແຫ່ງລັດ ທັງເປັນເລຂາທິການຄະນະລັດຖະບານ ໄດ້ອະທິບາຍກ່ຽວກັບແຜນການປະຕິຮູບກົງຈັກຄະນະລັດຖະບານຈີນ ໂດຍຊີ້ອອກວ່າ, ການປະຕິຮູບກົງຈັກຄະນະລັດຖະບານເປັນໜ້າທີ່ສຳຄັນຢ່າງໜຶ່ງໃນການປະຕິຮູບກົງຈັກຂອງພັກ ແລະ ລັດ ໂດຍຈະສຸມໃສ່ການປັບປຸງໜ້າທີ່ຮັບຜິດຊອບໃນຂົງເຂດສຳຄັນຕ່າງໆ ເຊັ່ນ ວິທະຍາສາດເຕັກນິກ, ການຕິດຕາມຄຸ້ມຄອງການເງິນ, ການຄຸ້ມຄອງຂໍ້ມູນຂ່າວສານ, ການພັດທະນາຊົນນະບົດໃຫ້ຈະເລີນຮຸ່ງເຮືອງ, ຊັບສິນທາງປັນຍາ, ວຽກງານຜູ້ອາຍຸສູງ ແລະ ອື່ນໆ, ຫັນປ່ຽນພາລະບົດບາດຂອງລັດຖະບານ,ເລັ່ງລັດສ້າງລັດຖະບານທີ່ປົກຄອງຕາມກົດໝາຍ.

## ມາເລເຊຍ ຈະປັບປ່ຽນລະບຽບການປ້ອງກັນພະຍາດໂຄວິດ-19



ອີງຕາມການລາຍງານໃນວັນທີ 27 ກຸມພານີ້, ໃຫ້ຮູ້ວ່າ: ຮອງລັດຖະມົນຕີກະຊວງສາທາລະນະສຸກມາເລເຊຍ ໄດ້ກ່າວວ່າ: ຄຽງຄູ່ກັບສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ມາເລເຊຍ ໄດ້ຜ່ອນຄາຍລົງ, ມາເລເຊຍພວມປັບປ່ຽນ "MySejahtera" ໂປແກມມືຖືທີ່ໃຊ້ເຂົ້າໃນການປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19 ໃນເມື່ອກ່ອນ ມາເປັນ "ຊຸບເປີໂປແກມ" ທີ່ໃຊ້ເຂົ້າໃນການຄຸ້ມຄອງສາທາລະນະສຸກ.

"MySejahtera" ເປັນໂປແກມທີ່ໃຊ້ເຂົ້າໃນການປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19 ຂອງມາເລເຊຍ ທີ່ລັດຖະບານມາເລເຊຍມອບໝາຍໃຫ້ພັດທະນາ.

ສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ມາເລເຊຍ ໄດ້ຮັກສາສະພາບທີ່ໝັ້ນທ່ຽງໃນໄລຍະມໍ່ໆມານີ້. ອີງຕາມຕົວເລກຂໍ້ມູນຂອງພາກສ່ວນສາທາລະນະສຸກມາເລເຊຍ ໃຫ້ຮູ້ວ່າ, ນັບແຕ່ວັນທີ 21-26 ກຸມພາ 2022, ມາເລເຊຍບໍ່ມີຜູ້ເສຍຊີວິດຍ້ອນພະຍາດດັ່ງກ່າວ ເປັນເວລາ 6 ມື້ຕິດຕໍ່ກັນ.

# ຢ່າໃຫ້ບັນຫາການຢ່າຮ້າງ ມີງ່າຍສະດວກເປັນຄອບຄົວ

(ເນື່ອງໃນໂອກາດວັນແມ່ຍິງສາກົນ 8 ມີນາ)

◆ ວິເສດ ສະແຫວງສຶກສາ

ມີຂ່າວອອກມາຈາກປະເທດອີຣານ ເມື່ອປະມານ 6 ປີ ຍ້ອນຫຼັງວ່າ ທາງການຂອງປະເທດນີ້ໄດ້ອອກມາດຕະການຄວບຄຸມການຢ່າຮ້າງລະຫວ່າງຄູ່ສົມລົດ (ຜົວ-ເມຍ) ເນື່ອງຈາກວ່າໃນໄລຍະຫຼັງໆມານີ້ ອັດຕາການຢ່າຮ້າງໃນປະເທດນີ້ ໄດ້ເພີ່ມຂຶ້ນ ເຊິ່ງຫຼາຍຄຳເຫັນບອກວ່າເປັນຍ້ອນນ້ຳມືຂອງສື່ສັງຄົມຍຸກໃໝ່ ແຕ່ອີກທາງສຽງໜຶ່ງພັດບອກວ່າ ເປັນຍ້ອນວິທີການຢ່າຮ້າງນັ້ນງ່າຍເກີນໄປ ຄືປ່ອຍໃຫ້ຄູ່ຜົວເມຍຕັດສິນໃຈເອົາເອງໂດຍລຳພັງ. ເພື່ອແກ້ໄຂບັນຫາການຢ່າຮ້າງໃຫ້ສອດຄ່ອງກັບເງື່ອນໄຂຕົວຈິງຂອງຊີວິດສົມລົດ, ທາງການຂອງອີຣານຈຶ່ງໄດ້ສ້າງກົນໄກສະເພາະເພື່ອໃຫ້ຂະບວນການຢ່າຮ້າງເປັນໄປຕາມຂັ້ນຕອນທີ່ເໝາະສົມຄື ກ່ອນຜົວ-ເມຍຈະຕັດສິນໃຈຢ່າຮ້າງກັນ ກໍຕ້ອງໄດ້ຜ່ານໜ່ວຍງານທີ່ປຶກສາ ເຊິ່ງປະກອບດ້ວຍຜູ້ຊ່ຽວຊານດ້ານຈິດຕະສາດກ່ຽວກັບຄອບຄົວ 2 ຄົນ. ຊ່ຽວຊານທັງສອງມີໜ້າທີ່ສຶກສາ ແລະ ໃຫ້ຄຳແນະນຳວິທີແກ້ໄຂຂໍ້ຂັດແຍ່ງ ເຊິ່ງຈະນຳໄປສູ່ການຢ່າຮ້າງວ່າມີເຫດຜົນສົມຄວນ ຫຼືບໍ່, ຖັດຈາກນັ້ນຊ່ຽວຊານທີ່ປຶກສາກໍຈະສົ່ງບົດສຶກສາຕີລາຄາໄປໃຫ້ຫ້ອງການສານ ເພື່ອຕັດສິນວ່າຄູ່ຜົວເມຍທີ່ມີບັນຫາຄວນໄດ້ຮັບອະນຸຍາດໃຫ້ຢ່າຮ້າງກັນ ຫຼືບໍ່. ດ້ວຍວິທີການ ແລະ ຂັ້ນຕອນດັ່ງກ່າວ, ທາງການອີຣານເຊື່ອວ່າການຢ່າຮ້າງກັນແບບຕາມໃຈ ຫຼື ດ້ວຍອາລົມຊົ່ວວູບຂອງຄູ່ຜົວເມຍຈະຫຼຸດລົງ ອັນຈະເປັນການຊ່ວຍພັດທະນາຊີວິດຄອບຄົວທີ່ເປັນຈຸລັງສຳຄັນພື້ນຕໍ່ຂອງສັງຄົມໃຫ້ມີຄວາມໝັ້ນຄົງ, ເພາະວ່າ ການມັກຮັກກັນຈົນເປັນຄອບຄົວນັ້ນມັນຍາກ ແຕ່ການພາກຈາກກັນໄປເປັນອື່ນນັ້ນມັນງ່າຍ. ສ່ວນຢູ່ປະເທດອັງກິດ ຫຼືເອີ້ນຊື່ເຕັມຢ່າງເປັນທາງການສະຫະລາຊະອານາຈັກອັງກິດນັ້ນ ພັດມີຂ່າວທີ່ສວນທາງກັບເລື່ອງທີ່ເກີດຢູ່ປະເທດອີຣານ ເພາະວ່າອັງກິດໄດ້ປະກາດໃຊ້ກົດໝາຍທີ່ເຮັດໃຫ້ການຢ່າຮ້າງລະຫວ່າງຜົວເມຍງ່າຍຂຶ້ນ ຄືບໍ່ຈຳເປັນຕ້ອງມີຫຼັກຖານຄວາມຜິດເພື່ອເປັນເຫດຜົນໃນການຢ່າຮ້າງ. ສະຫະລາຊະອານາຈັກອັງກິດນັ້ນ ປະກອບດ້ວຍ 4 ລັດ ຫຼື 4 ປະເທດຄື: ອັງກິດ, ສະກັອດແລນ, ເວວ ແລະ ອຽກລັງເໜືອ. ກົດໝາຍທີ່ພວມເວົ້າຮອດນີ້ ໄດ້ປະກາດໃຊ້ຢູ່ 2 ລັດຄື: ອັງກິດ ແລະ ເວວ. ກ່ອນໜ້ານີ້ ການປະກາດໃຊ້ກົດໝາຍໃໝ່ສະບັບນີ້, ການຢ່າຮ້າງລະຫວ່າງຄູ່ຜົວເມຍນັ້ນຕ້ອງໄດ້ຜ່ານຂັ້ນຕອນຄັກແນ່ ຄືກ່ອນຜົວເມຍຈະສາມາດຢ່າຮ້າງກັນໄດ້ນັ້ນ ກໍຕ້ອງໄດ້ພິສູດໃຫ້ເຫັນຢ່າງຈະແຈ້ງວ່າຝ່າຍໃດຝ່າຍໜຶ່ງໄດ້ມີຄວາມຜິດການໄດ້ນອກໃນໄປມີໃໝ່ກັບບຸກຄົນທາງນອກ ຫຼື ມີພຶດຕິກຳທີ່ບໍ່ເໝາະສົມເຊັ່ນ ປ່ອຍປະລະເລີຍຄູ່ສົມລົດ. ເຫດຜົນສູ່ການຢ່າຮ້າງດັ່ງກ່າວຍັງຕ້ອງໄດ້ຜ່ານຂະບວນການທາງກົດໝາຍຄືໂດຍອີງໃສ່ເຫດຜົນດັ່ງກ່າວ ສານຕັດສິນໃຫ້ທັງສອງແຍກກັນຢູ່ເປັນເວລາ 2 ປີ. ເມື່ອ 2 ປີຜ່ານໄປແລ້ວ, ແຕ່ຝ່າຍໃດຝ່າຍໜຶ່ງຍັງປະຕິເສດການຢ່າຮ້າງທາງສານກໍຈະເພີ່ມໄລຍະແຍກກັນຢູ່ຕື່ມອີກ 3 ປີ ລວມເປັນ 5 ປີ ກ່ອນຈະໄດ້ຮັບອະນຸຍາດໃຫ້ຢ່າຮ້າງກັນ (ເຖິງຈະມີຝ່າຍໃດຝ່າຍໜຶ່ງປະຕິເສດກໍຕາມ) ສ່ວນກົດໝາຍສະບັບໃໝ່ທີ່ປະກາດໃຊ້ຫວ່າງບໍ່ດົນມານີ້ ໄດ້ອະນຸຍາດໃຫ້ຜົວເມຍຢ່າຮ້າງກັນໄດ້ດ້ວຍເຫດຜົນພຽງວ່າ ທັງສອງບໍ່ສາມາດສືບຕໍ່ເປັນຜົວເມຍກັນຕໍ່ໄປໄດ້ຍ້ອນຂາດເງື່ອນໄຂ ແລະ ຄວາມສຸກທີ່ຈຳເປັນ. ນອກຈາກນັ້ນ ກົດໝາຍຍັງໄດ້ຍົກເລີກໄລຍະແຍກກັນຢູ່ 2 ປີ ຫຼື 5 ປີ ທີ່ເຄີຍປະຕິບັດມາ. ແນວໃດກໍດີ ກົດໝາຍສະບັບໃໝ່ນີ້ກໍບໍ່ໄດ້ອະນຸຍາດໃຫ້ມີການຢ່າຮ້າງກັນງ່າຍປານປ່ອນກ້ວຍເຂົ້າປາກ, ຄືຄູ່ຜົວ-ເມຍ ຍັງຕ້ອງໄດ້ລໍຖ້າເປັນເວລາ 20 ອາທິດ (5 ເດືອນ) ເພື່ອໃຫ້ຝ່າຍໃດຝ່າຍໜຶ່ງ (ໃນຄູ່ສົມລົດ) ເລີ່ມຂະບວນການຢ່າຮ້າງ ແລະ ຍື່ນຄຳຮ້ອງຂໍຢ່າຮ້າງຕາມກົດໝາຍຈາກນັ້ນ ຍັງຕ້ອງໄດ້ໃຊ້ເວລາອີກ 6 ອາທິດ (1 ເດືອນເຄິ່ງ) ກ່ອນການຢ່າຮ້າງຈະຖືກຮັບຮອງຢ່າງເປັນທາງການ. ວ່າກັນວ່າການເຮັດໃຫ້ຂະບວນການຢ່າຮ້າງງ່າຍດາຍຂຶ້ນນີ້ ໄດ້ສ້າງຄວາມພໍໃຈໃຫ້ແກ່ກຸ່ມທະນາຍຄວາມ ແຕ່ກໍມີຄຳເຫັນຈາກສັງຄົມອັງກິດວ່າ ຄວນມີວິທີປ້ອງກັນບໍ່ໃຫ້ຄວາມງ່າຍດາຍດັ່ງກ່າວສົ່ງຜົນກະທົບທາງດ້ານການເງິນ ແລະ ການເບິ່ງແຍງລ້ຽງດູລູກ ເມື່ອຄູ່ຜົວເມຍຢ່າຮ້າງກັນ, ມີບາງທາງສຽງກໍສະແດງຄວາມວິຕົກວ່າ ເມື່ອຢ່າຮ້າງກັນງ່າຍຂຶ້ນ, ການແຕ່ງດອງໃໝ່ກໍຈະເພີ່ມຂຶ້ນ ສັບປ່ຽນຄູ່ກັນປານປ່ຽນເກີບໃສ່.

ເລື່ອງບັນຫາການຢ່າຮ້າງທີ່ຂໍສະເໜີປິດທ້າຍບົດນີ້ນັ້ນ ເກີດຂຶ້ນຢູ່ເມືອງປູບາລິງກາ ຕັ້ງຢູ່ໃຈກາງເກາະຈາວາ ປະເທດອິນໂດເນເຊຍ. ຂ່າວນີ້ ເກີດຂຶ້ນແຕ່ປີ 2017 ແຕ່ຄວນເບິ່ງໄວ້ເປັນບົດຮຽນ ເພາະຫຼາຍເຫດການຢ່າຮ້າງກັນຢູ່ປະເທດລາວ ພວກເຮົາກໍມີສະພາບຄ້າຍຄຽງກັບເລື່ອງທີ່ພວມເວົ້າຢູ່ນີ້. ເລື່ອງມີຢູ່ວ່າໃນລະຫວ່າງກາງປີ 2017 ນັ້ນ ຢູ່ສານເມືອງປູບາລິງກາ ໄດ້ມີຈຳນວນແມ່ຍິງທີ່ເປັນເມຍທັງຫຼາຍພາກັນຕໍ່ແຖວເຂົ້າໄປຍື່ນໜັງສືຂໍຢ່າຮ້າງກັບຜູ້ເປັນຜົວ, ຍ້ອນຝ່າຍຜົວຕິດເກມແຂ່ງນົກຈົນລືມລູກລືມເມຍ. ກິລາແຂ່ງນົກກາງແກຢູ່ເມືອງນີ້ ມີມາແຕ່ດົນແລ້ວ ແຕ່ໄດ້ປ່ຽນສະພາບມາເປັນເກມການພະນັນ ເມື່ອຜູ້ຊາຍສ່ວນຫຼາຍໃນເມືອງນີ້ວ່າງງານ. ຂ່າວບອກວ່າທຸກມື້ແຕ່ເຊົ້າຮອດຄ່ຳ ບັນດາຜົວທັງຫຼາຍກໍຈະຕິດຢູ່ຕາມທ້ອງທົ່ງ ເພື່ອປ່ອຍນົກກາງແກແຂ່ງກັນວ່າຂອງໃຜຊິບິນເຍືອ, ບິນໄກ ແລະ ບິນສູງກວ່ານົກຄົນອື່ນ ແລະ ກໍມີການລົງເງິນກັນ. ເອົາໄປເອົາມາກໍເລີຍຕິດເກມນີ້ ປານຕິດຢາບ້າ, ປ່ອຍໃຫ້ບັນດາເມຍຕ້ອງໄດ້ແບກຫາບວຽກເຮືອນການຊານພຽງລຳພັງ. ສຸດທ້າຍບັ້ງອົດກໍເລີຍແຕກ, ຈຶ່ງໄດ້ຂໍໃຫ້ສານຕັດສິນອະນຸຍາດໃຫ້ຢ່າຮ້າງກັບຜົວ. ຂ່າວໜັງສືພິມ Vientiane Times ສະບັບວັນທີ 3/8/2017 ໃຫ້ຮູ້ວ່າການຂໍຢ່າຮ້າງຈາກຜົວໃນເດືອນມິຖຸນາ 2017 ນັ້ນມີພຽງ 13 ກໍລະນີ ແຕ່ໃນເດືອນກໍລະກົດປີດຽວກັນ ການຂໍປະຜົວໃນເມືອງປູບາລິງການີ້ ໄດ້ເພີ່ມຂຶ້ນຫຼາຍກວ່າ 90 ກໍລະນີ.

ການຢ່າຮ້າງບໍ່ວ່າຈະດ້ວຍເຫດຜົນໃດກໍດີ, ຜູ້ທີ່ໄດ້ຮັບຜົນກະທົບໜັກໜ່ວງກວ່ານັ້ນກໍແມ່ນຜູ້ເປັນເມຍນັ້ນເອງ.




## ຫົວໜ້າໂຫດ

*#ບ່າວກະບື*

*ໝາສອງໂຕໂສກັນອຸ່ມອິ່ມ ກ່ຽວກັບຜູ້ເປັນນາຍຂອງພວກຕົນ.*

ໝາໂຕທີໜຶ່ງເວົ້າວ່າ: "ນາຍເຮົາເຫັ້ນໂຫດມະຫາໂຫດ. ເວລາເຮົາເຫົ່າ, ມັນເຮັດທ່າທົນບໍ່ໄດ້ ແລະ ຈະບອກເຮົາເປັນປະຈຳໂລດວ່າ: "ງຽບປາກມຶງໄວ້ແດ່" ເພື່ອຈັດບໍ່ໃຫ້ເຮົາມີສຽງ. ສ່ວນໝາອີກໂຕໜຶ່ງ ເຊິ່ງມີເຈົ້າຂອງເປັນພະນັກງານຂັ້ນສູງເວົ້າຂຶ້ນວ່າ: "ວ່າສິ້ຮ້າຍ, ນາຍໂຕກໍຍັງສຸພາບຢູ່ໃດ. ສ່ວນນາຍເຮົານີ້ຕີ ຈົ່ງແມ່ນຊາດຄົດລ້ຽວບ້ຽວໃນ. ມັນບັງອາດເອົາປ້າຍຊຽນວ່າ: 'ລະວັງໝາຮ້າຍ' ໄປແຂວນໄວ້ຢູ່ປະຕູຮົ້ວ."

## CRUEL MASTER

***#BAOKBU***

Two dogs were discussing their masters.

The first said: "My master is very cruel. When I start harking, he can not stand it and keeps saying, 'shut up' to stop me from barking"

The other belonging to a high ranking official, said, "At least your master is polite. Mine is a most devious man, He has the audacity to put a signboard on his gate, Beware of mad dog"

ກາຕູນ




**ແມ່ຍິງຍຸກໃໝ່ກ້າວໄປສູ່ຄວາມສຳເລັດ**

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ :**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ຫອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ